**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

**ກອງທຶນປົກປັກຮັກສາສິ່ງແວດລ້ອມ**

# ຄຳແນະນຳ ວ່າດ້ວຍ
# ນະໂຍບາຍການສະໜອງທຶນພາຍໃນ
# ຂອງ ກອງທຶນປົກປັກຮັກສາສິ່ງແວດລ້ອມ
# ປີ 2022-2025

**ມິຖຸນາ, 2022**

# ຄຳນຳ

ກອງທຶນປົກປັກຮັກສາສິ່ງແວດລ້ອມ (ກປສ) ໄດ້ຮັບການສ້າງຕັ້ງຂຶ້ນໂດຍລັດຖະບານແຫ່ງ ສປປ ລາວ ໃນປີ 2005 ເພື່ອເປັນເສນາທິການໃຫ້ແກ່ລັດຖະບານ ໃນການລະດົມຂົນຂວາຍທຶນຈາກພາຍໃນ ແລະ ຕ່າງປະເທດ ເພື່ອຕອບສະໜອງເຂົ້າໃນວຽກງານຄຸ້ມຄອງຊັບພະຍາກອນທຳມະຊາດ ແລະ ປົກປັກຮັກສາສິ່ງແວດລ້ອມ ໃຫ້ມີປະສິດທິຜົນ ແລະ ປະກອບ ສ່ວນເຮັດໃຫ້ແຜນພັດທະນາເສດຖະກິດສັງຄົມ ບັນລຸຕາມທິດສີຂຽວ ແລະ ຍືນຍົງ.

ໃນໄລຍະ 5 ປີ ຜ່ານມາ (2016-2020) ກປສ ສາມາດລະດົມທຶນທັງພາຍໃນ ແລະ ສາກົນ ເພື່ອຕອບສະໜອງໃຫ້ແກ່ພາກສ່ວນຕ່າງໆໃນການຈັດຕັ້ງປະຕິບັດໂຄງການທີ່ຕິດພັນກັບການການຄຸ້ມຄອງຊັບພະຍາກອນທຳມະຊາດ ແລະ ປົກປັກຮັກສາສິ່ງແວດລ້ອມ ຈຳນວນ 137 ໂຄງການ (ໃນນີ້, ທຶນພາຍໃນ 89 ໂຄງການ ແລະ ທຶນສາກົນ 48 ໂຄງການ). ສຳລັບທຶນພາຍໃນແມ່ນ ໄດ້ສະໜອງທຶນໃຫ້ໂຄງການຂະໜາດນ້ອຍ ແລະ ກາງ ຜ່ານ 6 ຮ່ວງທຶນ ຄື: ຮ່ວງທຶນດ້ານນະໂຍບາຍ ແລະ ການສ້າງຄວາມເຂັ້ມແຂງດ້ານສິ່ງແວດລ້ອມ, ຮ່ວງທຶນດ້ານອະນຸລັກຊີວະນາໆພັນ ແລະ ພັດທະນາຊຸມຊົນ, ຮ່ວງທຶນດ້ານສິ່ງແວດລ້ອມ, ຮ່ວງທຶນດ້ານການຸຄຸ້ມຄອງຊັບພະຍາກອນນ້ຳແບບຍືນຍົງ, ຮ່ວງທຶນດ້ານການຄຸ້ມຄອງທີ່ດິນແບບຍືນຍົງ ແລະ ຮ່ວງທຶນດ້ານການປັບຕົວກັບການປ່ຽນແປງດິນຟ້າອາກາດ ໂດຍສອດຄ່ອງກັບແຜນບູລິມະສິດແຫ່ງຊາດ ໃນການຄຸ້ມຄອງຊັບພະຍາກອນທຳມະຊາດ ແລະ ປົກປັກຮັກສາສິ່ງແວດລ້ອມ.

ເພື່ອຮັບປະກັນໃຫ້ການເຄື່ອນໄຫວວຽກງານ ຂອງ ກປສ ດຳເນີນໄປຢ່າງມີປະສິດທິພາບ ແລະ ປະສິດທິຜົນ, ກປສ ໄດ້ສ້າງເອກະສານສຳຄັນຕ່າງໆເພື່ອເປັນເຄື່ອງມື ແລະ ທິດທາງ ໃນການດຳເນີນງານ ເປັນຕົ້ນ ວິໄສທັດຮອດປີ 2030, ຍຸດທະສາດ ຮອດປີ 2025, ແຜນການ 5 ປີ, ດຳລັດ ວ່າດ້ວຍ ກອງທຶນປົກປັກຮັກສາສິ່ງແວດລອ້ມ, ຂໍ້ຕົກລົງ ວ່າດ້ວຍ ການຄຸ້ມຄອງກອງທຶນປົກປັກຮັກສາສິ່ງແວດລ້ອມ, ຄູ່ມືການຄຸ້ມຄອງບໍລິຫານໂຄງການ ແລະ ຄູ່ມືອື່ນໆທີ່ກ່ຽວຂ້ອງ. ຄຳແນະນຳ ວ່າດ້ວຍ ນະໂຍບາຍການສະໜອງທຶນພາຍໃນຂອງກອງທຶນປົກປັກຮັກສາສິ່ງແວດລ້ອມ ສະບັບນີ້ ຈະເປັນເຄື່ອງມືສຳຄັນອີກອັນໜຶ່ງ ເພື່ອເປັນແນວທາງໃນການຈັດຕັ້ງປະຕິບັດວຽກງານການສະໜອງທຶນພາຍໃນ ໃຫ້ພາກສ່ວນຕ່າງໆທີ່ສະເໜີຂໍນຳໃຊ້ທຶນນຳ ກປສ. ຄຳແນະນຳ ສະບັບນີ້ ກຳນົດກອບການສະໜອງທຶນຂອງແຕ່ລະຮ່ວງທຶນ, ມາດຕະຖານເງື່ອນໄຂ ແລະ ຂັ້ນຕອນການສະໜອງທຶນ ຊຶ່ງສະແດງເຖິງນະໂຍບາຍ, ຈຸດປະສົງ ແລະ ເປົ້າໝາຍຂອງ ກປສ ທີ່ຕ້ອງການບັນລຸຜົນສຳເລັດ ຫຼື ເຫັນການປ່ຽນແປງ ກ່ຽວກັບ ການຄຸ້ມຄອງຊັບພະຍາກອນທຳມະຊາດ ແລະ ການປົກປັກຮັກສາສິ່ງແວດລ້ອມ ໃນ ສປປ ລາວ ໄລຍະ 4 ປີ ຕໍ່ ໜ້າ (2022-2025) ໂດຍປະຕິບັດໃຫ້ສອດຄ່ອງກັບກົດໝາຍ, ວິໄສທັດ, ຍຸດທະສາດ, ແຜນບູລິມະສິດ ຂອງ ຊາດ, ຂອງ ກປສ ແລະ ສອດຄ່ອງກັບ ລັກສະນະ ແລະ ສະພາບບັນຫາສິ່ງແວດລ້ອມຕົວຈິງ.

ຄຳແນະນຳ ສະບັບນີ້ ນຳໃຊ້ສຳລັບການສະໜອງທຶນພາຍໃນ ຂອງຫ້ອງການກອງທຶນປົກປັກຮັກສາສິ່ງແວດລອມ ເພື່ອເປັນບ່ອນອີງໃຫ້ແກ່ພະນັກງານຫ້ອງການກອງທຶນປົກປັກຮັກສາສິ່ງແວດລ້ອມ, ຜູ້ມີສ່ວນກ່ຽວຂ້ອງ ແລະ ຜູ້ມີສ່ວນຮ່ວມອື່ນ ສາມາດຈັດຕັ້ງປະຕິບັດວຽກງານຄົ້ນຄ້ວາສະໜອງທຶນໃຫ້ ພາກສ່ວນຕ່າງໆທີ່ສະເໜີຂໍນຳໃຊ້ທຶນພາຍໃນ ກປສ ຢ່າງມີປະສິດທິພາບ ແລະ ປະສົບຜົນສຳເລັດ.

ກປສ ຂໍສະແດງຄວາມຂອບໃຈ ມາຍັງສະມາຊິກສະພາບໍລິຫານ, ຄະນະວິຊາການ, ຂະແໜງການກ່ຽວຂ້ອງ, ອົງການປົກຄອງທ້ອງຖິ່ນແຕ່ລະຂັ້ນ ແລະ ຄູ່ຮ່ວມພັດທະນາຕ່າງໆ ທີ່ໄດ້ປະກອບສ່ວນທັງສະຕິປັນຍາ, ເຫື່ອແຮງ ແລະ ໃຫ້ການສະໜັບສະໜູນຢ່າງຕໍ່ເນື່ອງໃນການເຄື່ອນໄຫວວຽກງານຂອງ ກປສ ໃນໄລຍະຜ່ານມາ. ກປສ ຫວັງວ່າຈະໄດ້ຮັບການສືບຕໍ່ຮ່ວມມືຈາກທຸກພາກສ່ວນ ເພື່ອເຮັດໃຫ້ການຈັດຕັ້ງປະຕິບັດ ວິໄສທັດ 2030, ຍຸດທະສາດ

2025, ແຜນການ 5 ປີ (2021-2025) ແລະ ນະໂຍບາຍການສະໜອງທຶນພາຍໃນ (2022-2025) ຂອງ ກປສ ໄດ້ຮັບຜົນສຳເລັດຕາມຈຸດປະສົງ ແລະ ຄາດໝາຍ.

ນະຄອນຫຼວງວຽງຈັນ, ວັນທີ

**ສະພາບໍລິຫານກອງທຶນປົກປັກຮັກສາສິ່ງແວດລ້ອມ**

**ປະທານ**

ນ.ບຸນຄຳ ວໍລະຈິດ

ສາລະບານ


I. ພາກສະເໜີ ........ 1

II. ຈຸດປະສົງ ........ 2

III. ຂົງເຂດບູລິມະສິດ ແລະ ຂະໜາດໂຄງການ. ........ 3

IV. ກອບການສະໜອງທຶນ ຂອງແຕ່ລະຮ່ອງທຶນ. ........ 4

**4.1.** ການສະໜອງດ້ານນະໂຍບາຍ ແລະ ການສ້າງຄວາມເຂັ້ມແຂງດ້ານສິ່ງແວດລ້ອມ **(PFW) ........ 5**

4.2. ການສະໜອງທຶນຜ່ານຮ່ອງທຶນດ້ານອະນຸລັກຊີວະນາໆພັນ ລວມທັງປ່າໄມ້ ແລະ ພັດທະນາຊຸມຊົນ **(BFW) ........ 6**

**4.3.** ການສະໜອງທຶນຜ່ານຮ່ອງທຶນດ້ານສິ່ງແວດລ້ອມ ລວມທັງຄວບຄຸມມົນລະພິດ **(EWF) ........ 7**

4.4 ການສະໜອງທຶນຜ່ານຮ່ອງທຶນຄຸ້ມຄອງຊັບພະຍາກອນນ້ຳແບບຍືນຍົງ (WRM)........ **9**

**4.5.** ການສະໜອງທຶນຜ່ານຮ່ອງທຶນການຄຸ້ມຄອງທີ່ດິນແບບຍືນຍົງ (SLM)........ **10**

**4.6.** ການສະໜອງທຶນຜ່ານຮ່ອງທຶນການປັບປຸງແປງດິນຟ້າອາກາດ (CC) ........ **11**

V. ພາກສ່ວນທີ່ມີເງື່ອນໄຂຂໍນໍາໃຊ້ທຶນ ແລະ ມາດຖານການຄັດເລືອກ ........ 13

**5.1.** ພາກສ່ວນທີ່ມີເງື່ອນໄຂຂໍນໍາໃຊ້ທຶນ. ........ **13**

**5.2.** ມາດຖານການຄັດເລືອກ. ........ **13**

5.3. ການບໍ່ສະໜອງທຶນ ........ **13**

VI. ຂັ້ນຕອນການຍື່ນບົດສະເໜີຂໍທຶນນໍາ ກປສ. ........ 14

**6.1.** ການສະເໜີຂໍທຶນໂດຍພາກລັດ ........ **14**

**6.2.** ການສະເໜີຂໍທຶນໂດຍ ອົງການຈັດຕັ້ງສັງຄົມ ........ **15**

VII. ການຈັດສັນທຶນ ........ 15

**7.1. Annex 1 -** ແບບຟອມມາດຕະຖານ ໂຄງການຂະໜາດນ້ອຍ ເພື່ອຂໍທຶນຊ່ວຍເຫຼືອ ທີ່ມີມູນຄ່າ 100.000.000 ຫາ **300.000.000** ກີບ ........ **16**

**7.2. Annex 2** ແບບຟອມມາດຕະຖານ ເພື່ອຂໍທຶນຊ່ວຍເຫຼືອ ໂຄງການຂະໜາດກາງ ທີ່ມີມູນຄ່າບໍ່ເກີນ 800.000.000 ກີບ ........ **21**

# I. ພາກສະເໜີ

ປະຈຸບັນ ສະພາບການນຳໃຊ້ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ຢູ່ຫຼາຍປະເທດທົ່ວໂລກ ຢູ່ໃນສະພາວະທີ່ໜ້າເປັນຫ່ວງ ເພາະມີການຫລຸດຂອງຊັບພະຍາກອນທຳມະຊາດ ແລະ ການເຊື່ອມໂຊມຂອງສະພາບສິ່ງແວດລ້ອມ ກໍນັບມື້ນັບເພີ່ມຂຶ້ນ. ໃນບາງພື້ນທີ່ຢູ່ໃນສະພາວະຄວາມສ່ຽງຂາດການສົມດູນຂອງທຳມະຊາດ ແລະ ບາງບ່ອນມີສະພາວະເຕືອນໄພຈາກການຜິດປົກກະຕິຂອງປະກົດການທຳມະຊາດ. ສາເຫດສຳຄັນທີ່ເປັນທີ່ຮູ້ກັນທົ່ວໄປກໍແມ່ນ ມີການນຳໃຊ້ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ຢ່າງຫຼວງຫຼາຍ ຊຶ່ງສົ່ງຜົນກະທົບຕໍ່ຄຸນນະພາບຊີວິດຂອງມະນຸດ. ບັນຫາສິ່ງແວດລ້ອມທີ່ເກີດຂຶ້ນຈຶ່ງເປັນສິ່ງກະຕຸ້ນເຕືອນໃຫ້ປະເທດຕ່າງໆ ຕ້ອງຮີບຮ້ອນດຳເນີນການແກ້ໄຂບັນຫາທີ່ເກີດຂຶ້ນ ລວມທັງມີມາດຕະການໃນການປ້ອງກັນສິ່ງແວດລ້ອມ ເພື່ອປ້ອງກັນບໍ່ໃຫ້ເກີດບັນຫາເພີ່ມຂຶ້ນອີກ. ພ້ອມນັ້ນ ກໍຮ່ວມມືກັນໃນການປູກຝັງຄວາມຮູ້ຄວາມເຂົ້າໃຈໃນການນຳໃຊ້ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມໃນຮູບແບບອະນຸລັກໃຫ້ກ້ວາງຂວາງຍິ່ງຂຶ້ນ.

ສປປ ລາວ ເປັນປະເທດທີ່ມີຄວາມອຸດົມສົມບູນໄປດ້ວຍຊັບພະຍາກອນທຳມະຊາດ ເຊັ່ນ: ຊັບພະຍາກອນທີ່ດິນ, ຊັບພະຍາກອນປ່າໄມ້, ຊັບພະຍາກອນນ້ຳ, ທໍລະນີສາດ ແລະ ແຮ່ທາດ ແລະ ຊີວະນາໆພັນ ຊຶ່ງຊັບພະຍາ ກອນເຫຼົ່ານີ້ໄດ້ເປັນທ່າແຮງໃນການຊຸກຍູ້ ເຮັດໃຫ້ລວມຍອດຜະລິດຕະພັນພາຍໃນ ມີການຂະຫຍາຍຕົວ ແລະ ລາຍໄດ້ສະເລ່ຍຕໍ່ຫົວຄົນເພີ່ມຂຶ້ນ. ການພັດທະນາປະເທດ ແມ່ນອີງຕາມແຜນການພັດທະນາເສດຖະກິດ-ສັງຄົມແຫ່ງຊາດໃນແຕ່ລະໄລຍະ, ການຂະຫຍາຍຕົວເສດຖະກິດສ່ວນໃຫຍ່ໃນໄລຍະຜ່ານມາ ແມ່ນອີງໃສ່ທ່າແຮງຂອງຊັບພະຍາກອນທຳມະຊາດພາຍໃນປະເທດ ເປັນສ່ວນໃຫຍ່. ໄປຄຽງຄູ່ກັບການພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ສປປ ລາວ ກໍ່ປາສະຈາກບໍ່ໄດ້ເຖິງການພັດທະນາພື້ນຖານໂຄງລ່າງທີ່ຈຳເປັນ ອັນເປັນສາເຫດໜຶ່ງ ກໍ່ໃຫ້ເກີດຜົນກະທົບຕໍ່ສິ່ງແວດລ້ອມ. ແຕ່ເຖິງຢ່າງໃດກໍຕາມ ເພື່ອເປັນການຮັບມື, ວາງມາດຕະການແກ້ໄຂ ຫຼື ຫຼຸດຜ່ອນຜົນກະທົບທາງລົບຕໍ່ສິ່ງແວດລ້ອມ ແລະ ເພື່ອເປັນການຮັບປະກັນເຮັດໃຫ້ການນຳໃຊ້ຊັບພະຍາກອນທຳມະຊາດ ແບບປະຢັດ, ສົມເຫດສົມຜົນ ແລະ ມີຄວາມຍືນຍົງ ໄປຄຽງຄູ່ກັບການປົກປັກຮັກສາສິ່ງແວດລ້ອມ ແລະ ການພັດທະນາເສດຖະກິດ-ສັງຄົມ ໃນແຕ່ລະໄລຍະນັ້ນ, ລັດຖະບານ ກໍ່ໄດ້ວາງຍຸດທະສາດ, ວິໄສທັດ ແລະ ແຜນດຳເນີນງານງານຕ່າງໆ ກ່ຽວກັບ ການຄຸ້ມຄອງສິ່ງແວດລ້ອມ ແລະ ການເຕີບໂຕສີຂຽວ ພ້ອມທັງ ຈັດຕັ້ງປະຕິບັດໄປຄຽງຄູ່ກັບແຜນພັດທະນາເສດຖະກິດ-ສັງຄົມ ໃນແຕ່ລະໄລຍະ ຕາມທິດສີຂຽວ ແລະ ຍືນຍົງ.

ສະພາບສິ່ງແວດລ້ອມຂອງ ສປປ ລາວ ແມ່ນມີການປ່ຽນແປງໄປໃນແຕ່ລະໄລຍະ ອີງຕາມສະພາບ ແລະ ເງື່ອນໄຂຂອງການພັດທະນາເສດຖະກິດ-ສັງຄົມ, ປັດໃຈທີ່ເຮັດໃຫ້ສະພາບແວດລ້ອມມີການປ່ຽນແປງແມ່ນມີຫຼາຍຢ່າງເປັນຕົ້ນ: ການເພີ່ມຂຶ້ນຂອງພົນລະເມືອງ, ການເພີ່ມຂຶ້ນຂອງການລົງທຶນໃນແຕ່ລະຂະແໜງການ ເຊັ່ນ: ອຸດສາຫະກຳ, ກະສິກຳ-ປ່າໄມ້, ພະລັງງານ ແລະ ບໍ່ແຮ່, ການບໍລິການ, ການກໍ່ສ້າງໂຄງລ່າງພື້ນຖານ, ສາທາລະນະສຸກ ແລະ ຂະແໜງການອື່ນໆ ຊຶ່ງການພັດທະນາໃນແຕ່ລະຂະແໜງການ ສ່ວນຫຼາຍແມ່ນອີງໃສ່ແຕ່ທ່າແຮງ ການຂຸດຄົ້ນ ແລະ ນຳໃຊ້ຊັບພະຍາກອນທຳມະຊາດ ທີ່ມີຢູ່ພາຍໃນປະເທດເປັນຕົ້ນຕໍ. ພ້ອມດຽວກັນນັ້ນ ກໍຍັງເກີດມີໄພພິບັດທາງທຳມະຊາດ ຈາກສະພາບການປ່ຽນແປງຂອງດິນຟ້າອາກາດ ເປັນຕົ້ນ: ໄພແຫ້ງແລ້ງ, ໄພນ້ຳຖ້ວມ, ພາຍຸ, ໄພໜາວ, ແຜ່ນດິນໄຫວ, ການເຊາະເຈື່ອນຂອງດິນ.

ໃນໄລຍະຜ່ານມາ ກອງທຶນປົກປັກຮັກສາສິ່ງແວດລ້ອມ (ກປສ) ໄດ້ປະກອບສ່ວນຢ່າງຕັ້ງໜ້າ ໃນວຽກງານການຄຸ້ມຄອງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ໂດຍໄດ້ລະດົມຂົນຂວາຍທຶນທັງພາຍໃນ ແລະ ສາກົນເພື່ອຕອບສະໜອງໃຫ້ພາກສ່ວນຕ່າງໆທັງສູນກາງ ແລະ ທ້ອງຖິ່ນໃນການຈັດຕັ້ງປະຕິບັດວຽກງານການຄຸ້ມຄອງຊັບພະຍາກອນທຳມະຊາດ ແລະ ປົກປັກຮັກສາສິ່ງແວດລ້ອມປະກອບສ່ວນເຮັດໃຫ້ແຜນພັດທະນາເສດຖະກິດ-ສັງຄົມ

ບັນລຸຕາມທິດສີຂຽວ ແລະ ຍືນຍົງ ເປັນຕົ້ນ ການສ້າງ, ປັບປຸງ ແລະ ໂຄສະນາເຜີຍແຜ່ນິຕິກຳດ້ານສິ່ງແວດລ້ອມ, ການສ້າງຄວາມເຂັ້ມແຂງໃຫ້ແກ່ການຈັດຕັ້ງລັດ ທີ່ກ່ຽວຂ້ອງເພື່ອປະຕິບັດພາລະບົດບາດໃນການຄຸ້ມຄອງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ການຄຸ້ມຄອງປ່າສະຫງວນ ແລະ ປ່າປ້ອງກັນແຫ່ງຊາດ, ຂັ້ນແຂວງ, ການຄຸ້ມຄອງສິ່ງເສດເຫຼືອ ແລະ ສານເຄມີ, ການຄຸ້ມຄອງອ່າງຮັບນ້ຳ, ການຄຸ້ມຄອງ ແລະ ຈັດສັນທີ່ດິນ, ການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ, ການຕິດຕາມກວດກາດ້ານສິ່ງແວດລ້ອມ ແລະ ວຽກງານອື່ນໆທີ່ກ່ຽວຂ້ອງ.

ກປສ ມີແຫຼ່ງລາຍຮັບຕົ້ນຕໍຈາກຫຼາຍແຫຼ່ງ ເປັນຕົ້ນ ການປະກອບສ່ວນຕາມພັນທະໃນການປົກຮັກສາສິ່ງແວດລ້ອມ ຕາມສັນຍາສຳປະທານຂອງໂຄງການລົງທຶນຕ່າງໆ ໂດຍສອດຄ່ອງກັບກົດໝາຍວ່າດ້ວຍແຮ່ທາດ ແລະ ກົດໝາຍອື່ນໆ ທີ່ກ່ຽວຂ້ອງ, ໄດ້ຈາກການຊ່ວຍເຫຼືອຈາກອົງການຈັດຕັ້ງທັງພາຍໃນ ແລະ ຕ່າງປະເທດ, ໄດ້ຈາກດອກເບ້ຍ ແລະ ຜົນກຳໄລ ທີ່ເກີດຂຶ້ນຈາກການລົງທຶນ ລວມທັງຈາກຕົ້ນທຶນ ຂອງ ກປສ ທີ່ນຳໄປຝາກໄວ້ຢູ່ທະນາຄານ. ໃນແຕ່ລະປີ ກປສ ຈະໄດ້ມີການຈັດສັນທຶນພາຍໃນ ເພື່ອສະໜອງທຶນໃຫ້ກັບພາກສ່ວນຕ່າງໆ ທັງສູນກາງ ແລະ ທ້ອງຖິ່ນທຸກຂັ້ນ ຢູ່ ສປປ ລາວ ໃນການຈັດຕັ້ງວຽກງານຄຸ້ມຄອງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ໃຫ້ໄປຕາມເປົ້າໝາຍທີ່ໄດ້ກຳນົດໄວ້ ໂດຍຜ່ານກົນໄກການສະໜອງທຶນ ຕາມ 6 ຮ່ອງທຶນ ຄື: 1) ຮ່ອງທຶນດ້ານນະໂຍບາຍ ແລະ ການສ້າງຄວາມເຂັ້ມແຂງດ້ານສິ່ງແວດລ້ອມ; 2) ຮ່ອງທຶນດ້ານອະນຸລັກຊີວະນາໆພັນ ແລະ ພັດທະນາຊຸມຊົນ; 3) ຮ່ອງທຶນສິ່ງແວດລ້ອມ; 4) ຮ່ອງທຶນດ້ານການຄຸ້ມຄອງຊັບພະຍາກອນນ້ຳແບບຍືນຍົງ; 5) ຮ່ອງທຶນການຄຸ້ມຄອງທີ່ດິນແບບຍືນຍົງ ແລະ 6) ຮ່ອງທຶນດ້ານການປັບຕົວກັບການປ່ຽນແປງດິນຟ້າອາກາດ.

ສະນັ້ນ, ເພື່ອຮັບປະກັນໃຫ້ການສະໜອງທຶນພາຍໃນ ຂອງ ກປສ ສອດຄ່ອງກັບ ກົດໝາຍ, ວິໄສທັດ, ຍຸດທະສາດ ແລະ ແຜນບູລິມະສິດຂອງຊາດ, ຂອງ ກປສ ພ້ອມທັງ ສອດຄ່ອງກັບສະພາບບັນຫາສິ່ງແວດລ້ອມຕົວຈິງທີ່ຕ້ອງການແກ້ໄຂ, ແນວທາງນະໂຍບາຍ ແລະ ມາດຕະການໃນການຈັດຕັ້ງປະຕິບັດວຽກງານການຄຸ້ມຄອງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມໃນຊຸມປີຕໍ່ໜ້າ, ກປສ ຈຶ່ງມີຄວາມຈຳເປັນກຳນົດນະໂຍບາຍການສະໜອງທຶນພາຍໃນ ຂອງ ກປສ ເພື່ອເປັນແນວທາງໃນການຈັດຕັ້ງປະຕິບັດວຽກງານການສະໜອງທຶນຂອງ ກປສ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນ.

## II. ຈຸດປະສົງ

ຄຳແນະນຳ ວ່າດ້ວຍ ນະໂຍບາຍການສະໜອງທຶນພາຍໃນ ຂອງ ກປສ ສ້າງຂຶ້ນ ໂດຍມີຈຸດປະສົງດັ່ງນີ້:

- ເພື່ອຈັດຕັ້ງຜັນຂະຫຍາຍ ວິໄສທັດຮອດປີ 2030, ຍຸດທະສາດ ຮອດ 2025 ແລະ ແຜນການ 5 ປີ (2021-2025) ຂອງ ກປສ ໃຫ້ປະກົດຜົນເປັນຈິງ;
- ເພື່ອປະກອບສ່ວນໃຫ້ແກ່ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ IX (2021-2025) ຕາມທິດສີຂຽວ ແລະ ຍືນຍົງ;
- ເພື່ອປະກອບສ່ວນໃນແກ້ໄຂບັນຫາສິ່ງແວດລ້ອມທີ່ເກີດຂຶ້ນໃນປະຈຸບັນ, ປັບປຸງ ແລະ ຄຸ້ມຄອງສະພາບການນຳໃຊ້ຊັບພະຍາກອນທຳມະຊາດ ແລະ ແລະ ສິ່ງແວດລ້ອມໃຫ້ດີຂຶ້ນ;
- ເພື່ອກຳນົດຂົງເຂດບູລິມາສິດໃນການສະໜອງທຶນ, ກຳນົດກອບການສະໜອງທຶນຂອງແຕ່ລະຮ່ອງທຶນ, ກຳນົດເພດານການສະໜອງທຶນສຳລັບແຕ່ລະປະເພດໂຄງການ, ກຳນົດພາກສ່ວນທີ່ມີເງື່ອນໄຂຂໍນຳໃຊ້ທຶນ ແລະ ຂັ້ນຕອນການສະໜອງທຶນ;
- ເພື່ອສົ່ງເສີມພູມປັນຍາທ້ອງຖິ່ນ ໃນການບໍລິຫານຈັດການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມລະດັບຊຸມຊົນ.

## III. ຂົງເຂດບູລິມະສິດ ແລະ ຂະໜາດໂຄງການ.

ຂົງເຂດ ຫຼື ບັນດາກິດຈະກຳບູລິມະສິດທີ່ ກປສ ໃຫ້ການສະໜອງທຶນ ມີດັ່ງນີ້:

1) ຈັດຕັ້ງປະຕິບັດນະໂຍບາຍ ໃນການຕິດຕາມກວດກາ ດ້ານສິ່ງແວດລ້ອມ ແລະ ສັງຄົມ, ການສຳຫຼວດ, ຂຶ້ນບັນຊີ ແລະ ປະເມີນມູນຄ່າທາງດ້ານເສດຖະກິດຂອງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ສ້າງຄວາມສາມາດໃຫ້ແກ່ຂະແໜງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ນັບແຕ່ສູນກາງຮອດທ້ອງຖິ່ນ, ວຽກງານການສຶກສາ ແລະ ສ້າງຈິດສຳນຶກດ້ານສິ່ງແວດລ້ອມ;
2) ສ້າງຄວາມເຂັ້ມແຂງໃນການຄຸ້ມຄອງ ປ່າສະຫງວນ, ປ່າປ້ອງກັນ ແລະ ປ່າຜະລິດ ຕິດພັນກັບການປັບປຸງສິ່ງແວດລ້ອມ ແລະ ຊີວິດການເປັນຢູ່ຂອງຊຸມຊົນ;
3) ການຄຸ້ມຄອງ ແລະ ແກ້ໄຂບັນຫາສິ່ງແວດລ້ອມ ລວມທັງການກຳຈັດສິ່ງເສດເຫຼືອ, ຄວບຄຸມມົນລະພິດທາງນ້ຳ, ດິນ, ອາກາດ, ສຽງ, ຄຸ້ມຄອງສານເຄມີທີ່ເປັນອັນຕະລາຍເປັນຕົ້ນ ຢາປາບສັດຕູພືດ, ຢາຂ້າຫຍ້າ;
4) ການຄຸ້ມຄອງອ່າງຮັບນ້ຳ ແບບເຊື່ອມສານ, ທີ່ດິນບໍລິເວນນ້ຳ, ນ້ຳໃຕ້ດິນ ແລະ ການບໍລິຫານຈັດການນ້ຳເພື່ອການຜະລິດໄຟຟ້າ, ກະສິກຳ, ການປະມົງ ແລະ ອື່ນໆ;
5) ສ້າງແຜນຈັດສັນ ແລະ ແຜນການນຳໃຊ້ທີ່ດິນ, ການຂຶ້ນທະບຽນອອກໃບຕາດິນ ແລະ ການປະເມີນລາຄາທີ່ດິນ;
6) ການຫຼຸດຜ່ອນ ແລະ ແກ້ໄຂການປ່ຽນແປງດິນຟ້າອາກາດ ແລະ ການປ້ອງກັນຄວາມສ່ຽງໄພພິບັດທາງທຳມະຊາດ.

ການສະໜອງທຶນ ຂອງ ກປສ ແມ່ນຈະເນັ້ນໃສ່ເພື່ອແກ້ໄຂບັນຫາອັນຈຳເປັນ ແລະ ຮີບດ່ວນ ໂດຍຈະສະໜອງໃຫ້ແກ່ພາກສ່ວນທີ່ມີບົດບາດສຳຄັນໂດຍກົງໃນການຄຸ້ມຄອງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ລວມທັງ ພາກສ່ວນທີ່ກ່ຽວຂ້ອງ ແລະ ພາກສ່ວນທີ່ເຮັດວຽກສະໜັບສະໜູນໃຫ້ແກ່ການຄຸ້ມຄອງຊັບພະຍາກອນ ທຳມະຊາດ ແລະ ສິ່ງແວດລ້ອມທີ່ຍັງຂາດເຂີນງົບປະມານໃນການຈັດຕັ້ງປະຕິບັດວຽກງານ. ເນື່ອງຈາກວ່າ ກປສ ມີງົບປະມານຈຳກັດ ຈຶ່ງສຸມໃສ່ການສະໜອງທຶນໃນຮູບແບບໂຄງການຂະໜາດນ້ອຍ ແລະ ຂະໜາດກາງ ແນໃສ່ເພື່ອໃຫ້ທຸກພາກສ່ວນໃນສັງຄົມມີສ່ວນຮ່ວມໃນການຄຸ້ມຄອງຊັບພະຍາກອນທຳມະຊາດ ແລະ ປົກປັກຮັກສາສິ່ງແວດລ້ອມ. ການສະໜອງທຶນແມ່ນອີງໃສ່ແຜນບູລິມະສິດທີ່ໄດ້ກຳນົດໄວ້ໃນແຜນ 5 ປີ, ແຜນປີ ຂອງ ທກປສ. ສຳລັບໂຄງການຂະໜາດໃຫຍ່, ກປສ ສະໜັບສະໜູນໃຫ້ສະເໜີຂໍທຶນຊ່ວຍເຫຼືອຈາກຕ່າງປະເທດ ແລະ ອົງການຈັດຕັ້ງສາກົນຕ່າງໆ.

ກປສ ໄດ້ຈັດແບ່ງຂະໜາດໂຄງການ ໃນການສະໜອງທຶນພາຍໃນ ດັ່ງນີ້:

- ໂຄງການຂະໜາດນ້ອຍ: ວົງເງິນການສະໜອງທຶນບໍ່ເກີນ 300,000,000 ກີບຕໍ່ໂຄງການ, ໄລຍະຈັດຕັ້ງປະຕິບັດໂຄງການບໍ່ເກີນ 2 ປີ ນັບແຕ່ມື້ເຊັນສັນຍາເປັນຕົ້ນໄປ ແລະ ສັນຍາສາມາດຕໍ່ໄດ້ບໍ່ເກີນ 1 ຄັ້ງ (ຄັ້ງລະ 12 ເດືອນ);

- ໂຄງການຂະໜາດກາງ: ວົງເງິນການສະໜອງທຶນບໍ່ເກີນ 800,000,000 ກີບຕໍ່ໂຄງການ, ໄລຍະຈັດຕັ້ງປະຕິບັດໂຄງການບໍ່ເກີນ 4 ປີ ນັບແຕ່ມື້ເຊັນສັນຍາເປັນຕົ້ນໄປ ແລະ ສັນຍາສາມາດຕໍ່ໄດ້ບໍ່ເກີນ 2 ຄັ້ງ (ຄັ້ງລະ 12 ເດືອນ).

ການຕໍ່ອາຍຸໂຄງການທັງສອງຂະໜາດໂຄງການ ຈະສາມາດດຳເນີນໄດ້ຖ້າໂຄງການດັ່ງກ່າວມີການເຄື່ອນໄຫວເປັນປົກກະຕິ, ບໍ່ມີບັນຫາຄ້າງສະສາງ ແລະ ຈັດຕັ້ງປະຕິບັດການເບີກຈ່າຍເກີນ 50% ຂອງງົບປະມານໂຄງການທັງໝົດ.

## IV. ກອບການສະໜອງທຶນ ຂອງແຕ່ລະຮ່ວງທຶນ.

ອີງຕາມ ຂໍ້ຕົກລົງ ວ່າດ້ວຍ ການຄຸ້ມຄອງກອງທຶນປົກປັກຮັກສາສິ່ງແວດລ້ອມ ສະບັບເລກທີ 02/ກປສ.ສພ, ລົງວັນທີ 09 ກຸມພາ 2021 (ມາດຕາ 36) ກປສ ສະໜອງທຶນໃນຮູບແບບງົບປະມານ ຊຶ່ງລາຍລະອຽດການສະໜອງທຶນແຕ່ລະຮູບແບບສອດຄ່ອງກັບກົດໝາຍ ວ່າດ້ວຍງົບປະມານແຫ່ງລັດ ແລະ ກົດໝາຍວ່າດ້ວຍ ການລົງທຶນຂອງລັດ, ກປສ ສາມາດໃຫ້ການຊ່ວຍເຫຼືອກອງທຶນອື່ນຂອງລັດ ທີ່ກ່ຽວຂ້ອງກັບຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ໃນຖານະເປັນກອງທຶນຍ່ອຍ ໃນຮ່ວງທຶນ ກປສ ໃດໜຶ່ງຕາມການເຫັນດີ ຂອງທັງສອງຝ່າຍ ລະຫວ່າງ ກປສ ກັບ ອົງການສະໜອງທຶນ.

ການສະໜອງທຶນ ຕ້ອງຮັບປະກັນໃຫ້ສອດຄ່ອງກັບ ຂົງເຂດບູລິມະສິດການສະໜອງທຶນ ຂອງ ກປສ, ສອດຄ່ອງກັບ ກົດໝາຍ, ວິໄສທັດ, ຍຸດທະສາດ ແລະ ແຜນບູລິມະສິດຂອງຊາດ, ຂອງ ກປສ ພ້ອມທັງ ສອດຄ່ອງກັບສະພາບບັນຫາສິ່ງແວດລ້ອມຕົວຈິງທີ່ຕ້ອງການແກ້ໄຂ, ແນວທາງນະໂຍບາຍ ແລະ ມາດຕະການໃນການຈັດຕັ້ງປະຕິບັດວຽກງານການຄຸ້ມຄອງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ. ສະນັ້ນ, ກປສ ຈຶ່ງໄດ້ກຳນົດກອບການສະໜອງທຶນ ຂອງແຕ່ລະຮ່ວງທຶນ ໃນຊຸມປີຕໍ່ໜ້າ (2022-2025) ໂດຍອີງໃສ່ ບົດລາຍງານສະພາບສິ່ງແວດລ້ອມແຫ່ງຊາດ ສະບັບເລກທີ 6105/ກຊສ, ລົງວັນທີ 13 ທັນວາ 2021 ເພື່ອກຳນົດ ແລະ ແກ້ໄຂບັນຫາໃຫ້ສອດຄ່ອງກັບສະພາບຕົວຈິງ. ການວິເຄາະວິໄຈສະພາບແວດລ້ອມ ໃນ ສປປ ລາວ ໄດ້ກວມເອົາ 7 ຕົວຊີ້ວັດ ດ້ານສິ່ງແວດລ້ອມແຫ່ງຊາດ ຊຶ່ງສອດຄ່ອງກັບແຕ່ລະຮ່ວງທຶນ ຂອງ ກປສ ດັ່ງນີ້:

ຕົວຊີ້ວັດ 1: ບັນຫາຂີ້ເຫຍື້ອ ແມ່ນສອດຄ່ອງກັບຮ່ວງທຶນດ້ານສິ່ງແວດລ້ອມ ລວມທັງຄວບຄຸມມົນລະພິດ;
ຕົວຊີ້ວັດ 2: ບັນຫາຄຸນນະພາບນ້ຳ ແມ່ນສອດຄ່ອງກັບຮ່ວງທຶນດ້ານການຄຸ້ມຄອງຊັບພະຍາກອນນ້ຳແບບຍືນຍົງ;
ຕົວຊີ້ວັດ 3: ຄຸນນະພາບອາກາດ ແມ່ນສອດຄ່ອງກັບຮ່ວງທຶນດ້ານການປ່ຽນແປງດິນຟ້າອາກາດ;
ຕົວຊີ້ວັດ 4: ສານເຄມີຕົກຄ້າງໃນດິນແມ່ນສອດຄ່ອງກັບຮ່ວງທຶນດ້ານສິ່ງແວດລ້ອມລວມທັງຄວບຄຸມມົນລະພິດ;
ຕົວຊີ້ວັດ 5-6: ບັນຫາເນື້ອທີ່ການປົກຫຸ້ມຂອງປ່າໄມ້ ແລະ ບັນຫາ ຊີວະນາໆພັນ ແມ່ນສອດຄ່ອງກັບຮ່ວງທຶນດ້ານອະນຸລັກຊີວະນາໆພັນ ລວມທັງປ່າໄມ້ ແລະ ພັດທະນາຊຸມຊົນ;
ຕົວຊີ້ວັດ 7: ບັນຫາການປັບຕົວເຂົ້າກັບການປ່ຽນແປງດິນຟ້າອາກາດ ແມ່ນສອດຄ່ອງກັບຮ່ວງທຶນດ້ານການປ່ຽນແປງດິນຟ້າອາກາດ.

ນອກຈາກນັ້ນ, ແຕ່ລະຕົວຊີ້ວັດ ໄດ້ມີການກຳນົດນະໂຍບາຍ ເພື່ອສ້າງນິຕິກຳ ແລະ ສ້າງຄວາມເຂັ້ມແຂງໃນແຕ່ລະດ້ານ ຊຶ່ງສອດຄ່ອງກັບຮ່ວງທຶນ ດ້ານນະໂຍບາຍ ແລະ ການສ້າງຄວາມເຂັ້ມແຂງດ້ານສິ່ງແວດລ້ອມ.

ການກຳນົດກອບການສະໜອງທຶນຂອງແຕ່ລະຮ່ວງທຶນມີດັ່ງນີ້:

### 4.1. ການສະໜອງດ້ານນະໂຍບາຍ ແລະ ການສ້າງຄວາມເຂັ້ມແຂງດ້ານສິ່ງແວດລ້ອມ (PFW)

ຈຸດປະສົງຫຼັກຂອງການສະໜອງທຶນຜ່ານຮ່ວງດ້ານນະໂຍບາຍ ແລະ ການສ້າງຄວາມເຂັ້ມແຂງດ້ານສິ່ງແວດລ້ອມໂດຍອີງຕາມຂໍ້ຕົກລົງວ່າດ້ວຍການຄຸ້ມຄອງ ກປສ (ປີ 2021) ແມ່ນເພື່ອສະໜັບສະໜູນການຈັດຕັ້ງປະຕິບັດວຽກງານຄື: (1) ການສ້າງຄວາມເຂັ້ມແຂງໃຫ້ອົງກອນ ແລະ ບຸກຄະລາກອນເພື່ອຮັບປະກັນການຄຸ້ມຄອງຊັບພະຍາກອນທຳມະຊາດແບບຍືນຍົງ ແລະ ການຄຸ້ມຄອງສິ່ງແວດລ້ອມຂັ້ນສູນກາງ, ແຂວງ ແລະ ເມືອງ; (2) ສະໜັບສະໜູນການຈັດຕັ້ງປະຕິບັດຂອງຄະນະກຳມະການລວມທັງ ສະພາບໍລິຫານ ແລະ ຄະນະວິຊາການ ກປສ; (3) ພັດທະນາ, ປັບປຸງ, ເຜີຍແຜ່ຂໍ້ມູນຂ່າວສານ ແລະ ຕິດຕາມກິດຈະກຳທີ່ກ່ຽວຂ້ອງກັບນະໂຍບາຍ, ຍຸດທະສາດ ແລະ ນິຕິກຳໃນການຄຸ້ມຄອງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ; ແລະ (4) ສ້າງຖານຂໍ້ມູນ ແລະ ລະບົບການລົງທະບຽນ, ລະຫັດຂອງຂໍ້ມູນກ່ຽວກັບຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ການຄົ້ນຄວ້າ ແລະ ເຜີຍແຜ່ ກ່ຽວກັບຊັບພະຍາກອນທຳມະຊາດ ລວມທັງມາດຕະການແກ້ໄຂບັນຫາສຸກເສີນກ່ຽວກັບຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ.

ໃນໄລຍະຜ່ານມາ (2016-2020) ກປສ ໄດ້ສະໜອງທຶນດ້ານນະໂຍບາຍ ແລະ ການສ້າງຄວາມເຂັ້ມແຂງດ້ານສິ່ງແວດລ້ອມ ໃຫ້ພາກສ່ວນຕ່າງໆ ທັງສູນກາງ ແລະ ທ້ອງຖິ່ນ ລວມທັງໝົດ 22 ໂຄງການ (ຂັ້ນແຂວງ 11 ໂຄງການ ແລະ ຂັ້ນສູງກາງ 11 ໂຄງການ: ແຂວງໄຊຍະບູລີ, ບໍ່ແກ້ວ, ຫລວງນ້ຳທາ, ອຸດົມໄຊ, ຜົ້ງສາລີ, ສາລະວັນ, ຈຳປາສັກ, ເຊກອງ ອັດຕະປື, ແລະ ນະຄອນຫຼວງ) ເພື່ອແກ້ໄຂບັນຫາທາງດ້ານສິ່ງແວດລ້ອມ ທີ່ມີຜົນກະທົບຕໍ່ສັງຄົມ ໂດຍສະເພາະແມ່ນວຽກງານປູກຈິດສຳນຶກ, ເຜີຍແຜ່ລະບຽບກ່ຽວກັບສິ່ງແວດລ້ອມ, ລົງຕິດຕາມໂຄງການພັດທະນາ ແລະ ແກ້ໄຂບັນສິ່ງແວດລ້ອມ ແລະ ສານເຄມີ.

ໂດຍອີງໃສ່ບົດລາຍງານສະພາບສິ່ງແວດລ້ອມແຫ່ງຊາດ ເຫັນວ່າ ສປປ ລາວ ຍັງມີຄວາມຈຳເປັນຕ້ອງໄດ້ມີການສ້າງ ແລະ ພັດທະນານິຕິກຳ ດ້ານສິ່ງແວດລ້ອມ ພ້ອມທັງສ້າງຄວາມເຂັ້ມແຂງໃຫ້ອົງການຈັດຕັ້ງທີ່ກ່ຽວຂ້ອງເປັນຕົ້ນ: ການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍ ການປົກປັກຮັກສາສິ່ງແວດລ້ອມ, ກົດໝາຍນ້ຳ ແລະ ຊັບພະຍາກອນນ້ຳ, ກົດໝາຍວ່າດ້ວຍທີ່ດິນ, ກົດໝາຍວ່າດ້ວຍປ່າໄມ້, ກົດໝາຍສັດນ້ຳ-ສັດປ່າ ແລະ ກົດໝາຍ ວ່າດ້ວຍຍຸດທະສາດວ່າດ້ວຍການປ່ຽນແປງດິນຟ້າອາກາດ. ເນື່ອງຈາກໃນຊຸມປີຜ່ານມາ ມີຫຼາຍນິຕິກຳ ທີ່ຕິດພັນກັບການຄຸ້ມຄອງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ໄດ້ຮັບການສ້າງ ແລະ ປັບປຸງຢ່າງເປັນລະບົບ ສະນັ້ນ, ໃນຊຸມປີຕໍ່ໜ້າ (2022-2025) ການສະໜອງທຶນ ຂອງ ກປສ ສຳລັບຮ່ວງທຶນດ້ານນະໂຍບາຍ ແລະ ການສ້າງຄວາມເຂັ້ມແຂງດ້ານສິ່ງແວດລ້ອມ ຈະສຸມໃສ່ ການໂຄສະນາເຜີຍແຜ່ ແລະ ຈັດຕັ້ງປະຕິບັດນິຕິກຳ ຫຼາຍກວ່າການສ້າງ ແລະ ປັບປຸງນິຕິກຳ ຊຶ່ງຈະໄດ້ຫຼຸດງົບປະມານການສະໜອງທຶນໃນຮ່ວງທຶນນີ້ລົງທຽບໃສ່ຊຸມປີຜ່ານມາ (ຈາກ 40% ມາເປັນ 30%) ໂດຍໄດ້ກຳນົດກອບການສະໜອງທຶນ ດັ່ງນີ້:

1) ສະໜັບສະໜູນການເຜີຍແຜ່ຂໍ້ມູນຂ່າວສານ ແລະ ຕິດຕາມກິດຈະກຳທີ່ກ່ຽວຂ້ອງກັບການຈັດຕັ້ງປະຕິບັດນະໂຍບາຍ, ຍຸດທະສາດ ແລະ ນິຕິກຳໃນການຄຸ້ມຄອງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ;
2) ສ້າງຄວາມເຂັ້ມແຂງໃຫ້ແກ່ທ້ອງຖິ່ນ (ພຊສ, ຫຊສ ແລະ ພະແນກການທີ່ກ່ຽວຂ້ອງ) ໃນການປະຕິບັດພາລະບົດບາດການຄຸ້ມຄອງຊັບພະຍາກອນທຳມະຊາດ ແລະ ການປົກປັກຮັກສາສິ່ງແວດລ້ອມ;
3) ສະໜັບສະໜູນການສ້າງຖານຂໍ້ມູນ ແລະ ລະບົບການລົງທະບຽນ, ລະຫັດຂອງຂໍ້ມູນກ່ຽວກັບຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ການຄົ້ນຄວ້າ, ເຄືອຄ່າຍເຜີຍແຜ່, ມາດຕະການແກ້ໄຂບັນຫາສຸກເສີນກ່ຽວກັບ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ;
4) ກິດຈະກຳອື່ນໆ ທີ່ໄດ້ຮັບການພິຈາລະນາອະນຸມັດຈາກ ສະພາບໍລິຫານ ກປສ.

## 4.2. ການສະໜອງທຶນຜ່ານຮ່ອງທຶນດ້ານອະນຸລັກຊີວະນາໆພັນ ລວມທັງປ່າໄມ້ ແລະ ພັດທະນາຊຸມຊົນ (BFW)

ຈຸດປະສົງຫຼັກຂອງການສະໜອງທຶນຜ່ານຮ່ອງທຶນ ດ້ານອະນຸລັກຊີວະນາໆພັນ ລວມທັງປ່າໄມ້ ແລະ ພັດທະນາຊຸມຊົນ ໂດຍອີງຕາມຂໍ້ຕົກລົງວ່າດ້ວຍການຄຸ້ມຄອງ ກປສ (ປີ 2021) ແມ່ນເພື່ອສະໜັບສະໜູນການຈັດຕັ້ງປະຕິບັດວຽກງານຄື: (1) ການພັດທະນາຊຸມຊົນ ແລະ ການຈັດຕັ້ງກິດຈະກຳອານຸລັກ ແລະ ແຜນການຄຸ້ມຄອງປົກປັກຮັກສາປ່າໄມ້ໃນຂັ້ນສູນກາງ ແລະ ຂັ້ນແຂວງ ໂດຍເນັ້ນໜັກໃສ່ແຜນການນຳໃຊ້ທີ່ດິນ ແລະ ການວາງແຜນສິ່ງແວດລ້ອມແບບຮອບດ້ານໃນວຽກງານປ່າໄມ້ ແລະ ສິ່ງແວດລ້ອມເພື່ອໄປສູ່ທິດທາງແບບຍືນຍົງ ໂດຍການມີສ່ວນຮ່ວມຂອງຊຸມຊົນ ໃນການເຊື່ອມໂຍງເຂົ້າກັບບູລິມະສິດແຫ່ງຊາດ ໃນການຄຸ້ມຄອງຊັບພະຍາກອນນໍ້າເພື່ອການພັດທະນາເຂື່ອນໄຟຟ້ານໍ້າຕົກແບບຍືນຍົງ; (2) ພັດທະນາ ແລະ ສະເໜີໃຫ້ຜູ້ຕັດສິນໃຈສຳລັບການຈັດສັນເຂດອານຸລັກລະດັບຊາດ ແລະ ລະດັບແຂວງ ແລະ ພື້ນທີ່ປ່າປ້ອງກັນໃນເຂດທີ່ເໝາະສົມເພື່ອເປັນສວນອຸທະຍານແຫ່ງຊາດ ແລະ ປະກາດເປັນປ່າສະຫງວນແຫ່ງຊາດ; (3) ສຶກສາ ແລະ ຄົ້ນຄ້ວາລາຍການ ແລະ ການຈົດສິດທິບັດທຸກປະເພດຂອງສັດປ່າ, ສັດນໍ້າ ແລະ ມູນຄ່າຂອງລະບົບນິເວດທີ່ມີມູນຄ່າສູງທາງສິ່ງແວດລ້ອມ ແລະ ເສດຖະກິດ ແລະ ສ້າງສວນສາທາລະນະໃນຕົວເມືອງບູລິມະສິດ.

ໃນໄລຍະຜ່ານມາ (2016-2020) ກປສ ໄດ້ສະໜອງທຶນດ້ານອະນຸລັກຊີວະນາໆພັນ ລວມທັງປ່າໄມ້ ແລະ ພັດທະນາຊຸມຊົນ ໃຫ້ພາກສ່ວນຕ່າງໆ ທັງສູນກາງ ແລະ ທ້ອງຖິ່ນ ລວມທັງໝົດ 20 ໂຄງການ (ຂັ້ນແຂວງ 18 ໂຄງການ, ແລະ ຂັ້ນສູນກາງ 5 ໂຄງການ) ໂດຍສະໜອງທຶນໃນການຄຸ້ມຄອງປ່າສະຫງວນ (4 ແຫ່ງ), ປ່າປ້ອງກັນ (8 ແຫ່ງ) ແລະ ສວນພຶກສາສາດ (1 ແຫ່ງ) ເພື່ອແກ້ໄຂບັນຫາການສູນເສຍຊີວະນາງໆພັນ ໂດຍສະເພາະ ເຜີຍແຜ່ກົດໝາຍວ່າດ້ວຍປ່າໄມ້, ປູກຈິດສຳນຶກ, ປັກຫລັກໝາຍເຂດແດນ, ກວດກາລາດຕະເວນ, ແບ່ງເຂດຈັດສັນທີ່ດິນ, ສ້າງແຜນຄຸ້ມຄອງປ່າໄມ້, ປັບປຸງຊີວິດການເປັນຢູ່ຂອງປະຊາຊົນ ແລະ ກອງທຶນບ້ານ ເຊັ່ນ: ການຄຸ້ມຄອງປ່າປ້ອງກັນແຫ່ງຊາດນໍ້າມ່ວນ-ນໍ້າຍ່ວງ ແຂວງບໍລິຄຳໄຊ, ປ່າສະຫງວນແຫ່ງຊາດພູຫີຜີ ແຂວງອຸດົມໄຊ, ປ່າສະຫງວນນໍ້າຍາວ-ນໍ້າຍອງ ແລະ ປ່າປ້ອງກັນຫ້ວຍຕາບ ແຂວງບໍ່ແກ້ວ, ປ່າປ້ອງກັນພູສາມຍອດ ແຂວງຫລວງ ນໍ້າທາ, ປ່າສະຫງວນນໍ້າລານ ແຂວງຜົ້ງສາລີ, ປ່າປ້ອງກັນພູເກົ້າ-ພູນາກ ແຂວງສາລະວັນ, ປ່າປ້ອງກັນຫ້ວຍໂທນ ແຂວງ ເຊກອງ, ປ່າປ້ອງກັນພູພຽງບໍລະເວນ ແຂວງຈຳປາສັກ ແລະ ແຂວງອັດຕະປື, ປ່າປ້ອງກັນນໍ້າຮຸ່ງນໍ້າແມດ ແຂວງໄຊຍະບູລີ, ປ່າປ້ອງກັນຍອດນໍ້າງຽບ ແຂວງຊຽງຂວາງ ແລະ ສ້າງສວນພຶກສາສາດດົງໝາກຄາຍ-ຫ້ວຍຍາງ ນະຄອນຫຼວງວຽງຈັນ.

ໂດຍອີງໃສ່ບົດລາຍງານສະພາບສິ່ງແວດລ້ອມແຫ່ງຊາດ ເຫັນວ່າ ການຈັດຕັ້ງປະຕິບັດນະໂຍບາຍ, ຍຸດທະສາດ ແລະ ແຜນດຳເນີນງານແຫ່ງຊາດກ່ຽວກັບການຄຸ້ມຄອງ ແລະ ປົກປັກຮັກສາປ່າໄມ້ ແລະ ຊີວະນາໆພັນແຫ່ງຊາດແຕ່ປີ 2016-2020 ເຖິງວ່າຈະເຮັດໄດ້ດີ ແຕ່ຍັງບໍ່ທັນບັນລຸຕາມຈຸດປະສົງເປົ້າໝາຍຂອງລັດຖະບານທີ່ໄດ້ຕັ້ງເປົ້າໝາຍໄວ້ ເນື່ອງຈາກວ່າຜົນບັງຄັບໃຊ້ທາງດ້ານກົດໝາຍ ແລະ ນິຕິກຳຕ່າງໆ ຍັງບໍ່ທັນເຂັ້ມງວດ ແລະ ບໍ່ທັນມີຜົນສັກສິດເທົ່າທີ່ຄວນ, ຍັງມີສະພາບການບຸກເບີກພື້ນທີ່ປ່າສະຫງວນ, ຊີວະນາໆພັນຍັງຖືກທຳລາຍ, ກົນໄກການຄຸ້ມຄອງປ່າໄມ້ ແລະ ຊີວະນາໆພັນຍັງບໍ່ເປັນລະບົບ ພ້ອມດຽວກັນນັ້ນຄວາມຮູ້ຄວາມສາມາດຂອງບຸກຄະລາກອນແມ່ນຍັງຈຳກັດບວກໃສ່ທຶນຮອນໃນການຈັດຕັ້ງປະຕິບັດ ແມ່ນຍັງບໍ່ທັນພຽງພໍກັບຄວາມຮຽກຮ້ອງຕ້ອງການຕົວຈິງ. ເພື່ອແກ້ໄຂບັນຫາດັ່ງກ່າວ ເຫັນວ່າຍັງມີຄວາມຈຳເປັນຕ້ອງສະໜອງທຶນໃຫ້ແກ່ວຽກງານການຄຸ້ມຄອງປ່າໄມ້ ແລະ ອະນຸລັກຊີວະນາໆພັນ. ແຕ່ປະຈຸບັນມີຫຼາຍອົງການຈັດຕັ້ງສາກົນໄດ້ໃຫ້ທຶນສະໜັບສະໜູນການຈັດຕັ້ງປະຕິບັດວຽກງານດັ່ງກ່າວ ເຊັ່ນ: ໂຄງການ 3L ທີ່ໄດ້ຮັບຈາກທະນາຄານໂລກ, ໂຄງການ I-GFLL ທີ່ໃຫ້ທຶນຈາກ GCF ຜ່ານ GIZ ແລະ ໂຄງການອື່ນໆ. ນອກນັ້ນ, ຍັງມີກອງທຶນປົກປັກຮັກສາປ່າໄມ້ ທີ່ໃຫ້ທຶນໃນການຄຸ້ມຄອງປ່າໄມ້ ແລະ ຊີວະນາໆພັນ. ສະນັ້ນ, ໃນຊຸມປີຕໍ່ໜ້າ (2022-2025) ການສະໜອງທຶນ ຂອງ ກປສ ສຳລັບຮ່ອງທຶນດ້ານອະນຸລັກຊີວະ

ນາໆພັນ ລວມທັງປ່າໄມ້ ແລະ ພັດທະນາຊຸມຊົນ ຈະຫຼຸດງົບປະມານລົງ (ຈາກ 30% ມາເປັນ 15%) ຊຶ່ງໄດ້ກຳນົດກອບການສະໜອງທຶນ ດັ່ງນີ້:

1) ສົ່ງເສີມການຄຸ້ມຄອງ, ປົກປັກຮັກສາ ແລະ ນຳໃຊ້ປ່າແບບຍືນຍົງຂອງຊຸມຊົນ ເພື່ອປົກປັກຮັກສາປ່າຍອດນໍ້າ ແລະ ເຮັດໃຫ້ເນື້ອທີ່ປົກຫຸ້ມປ່າໄມ້ເພີ່ມຂຶ້ນໃຫ້ໄດ້ 70% ຂອງເນື້ອທີ່ດິນທົ່ວປະເທດ ແລະ ຊຸກຍູ້ການຂະຫຍາຍຕົວເສດຖະກິດແຫ່ງຊາດ ແລະ ການເຕີບໂຕສີຂຽວ;
2) ສຳຫຼວດ, ຈັດແບ່ງ, ໝາຍເຂດປ່າ ແລະ ປະເພດປ່າ ພ້ອມທັງມີການຕິດຕາມກວດກາການຄຸ້ມຄອງ ແລະ ນຳໃຊ້ປ່າແຕ່ລະປະເພດ 3 ປະເພດປ່າ ເຊັ່ນ: ປ່າສະຫງວນ, ປ່າປ້ອງກັນ ແລະ ປ່າຜະລິດ;
3) ສົ່ງເສີມການເກັບກຳຂໍ້ມູນ, ການຂຶ້ນບັນຊີ ແລະ ການຄາດຄະເນມູນຄ່າຊັບພະຍາກອນທຳມະຊາດ;
4) ສົ່ງເສີມການອະນຸລັກພັນພືດ, ພັນສັດ ທີ່ຫາຍາກ ແລະ ໃກ້ຈະສູນພັນ ລວມທັງການປົກປັກຮັກສາທີ່ຢູ່ອາໃສຂອງພືດ ແລະ ສັດດັ່ງກ່າວ;
5) ສົ່ງເສີມການປູກປ່າ ແລະ ຟື້ນຟູປ່າ ໃສ່ດິນປອກໂລ້ນ ແລະ ດິນເຊື່ອມໂຊມ ເພື່ອຂະຫຍາຍເນື້ອທີ່ປົກຫຸ້ມຂອງປ່າ ແລະ ຍົກລະດັບຊີວິດການເປັນຢູ່ຂອງປະຊາຊົນໃຫ້ດີຂຶ້ນ;
6) ສ້າງລະບົບ ແລະ ກົນໄກໃນການຊົດເຊີຍຊີວະນາໆພັນ ແລະ ເກັບອາກອນລະບົບນິເວດວິທະຍາ ແລະ ສິ່ງແວດລ້ອມ;
7) ສົ່ງເສີມການທ່ອງທ່ຽວແບບອະນຸລັກ ແລະ ໃຫ້ຄວາມສຳຄັນໃນການຄຸ້ມຄອງ ແລະ ປົກປັກຮັກສາຊີວະນາໆພັນ;
8) ກຳນົດທີ່ດິນປ່າໄມ້, ເຂດສະຫງວນປ່າຍອດນໍ້າ, ພື້ນທີ່ຟື້ນຟູປ່າໄມ້, ເຂົ້າໃນແຜນຈັດສັນທີ່ດິນ ແລະ ຄຸ້ມຄອງສິ່ງແວດລ້ອມແບບຮອບດ້ານ;
9) ກິດຈະກຳອື່ນໆ ທີ່ໄດ້ຮັບການພິຈາລະນາອະນຸມັດຈາກ ສະພາບໍລິຫານ ກປສ.

### 4.3. ການສະໜອງທຶນຜ່ານຮ່ວງທຶນດ້ານສິ່ງແວດລ້ອມ ລວມທັງຄວບຄຸມມົນລະພິດ (EWF)

ຈຸດປະສົງຫຼັກຂອງການສະໜອງທຶນຜ່ານຮ່ວງທຶນສິ່ງແວດລ້ອມ ລວມທັງການຄວບຄຸມມົນລະພິດ ຫຼື EPC ໂດຍອີງຕາມຂໍ້ຕົກລົງວ່າດ້ວຍການຄຸ້ມຄອງ ກປສ (ປີ 2021) ແມ່ນເພື່ອສະໜັບສະໜູນການຈັດຕັ້ງປະຕິບັດວຽກງານຄື: (1) ສ້າງເຄືອຄ່າຍລະດັບຊາດຕາມແນວທາງ “ຂຽວ ສະອາດ ແລະ ງາມຕາ (GCB) ເພື່ອເຮັດກິດຈະກຳຢູ່ໃນຕົວເມືອງໃຫຍ່ ແລະ ຢູ່ຕາມເສັ້ນທາງຫຼວງແຫ່ງຊາດເລກທີ 13 ແລະ ຕາມແຄມແມ່ນໍ້າແຕ່ເໜືອເຖິງໃຕ້; (2) ການພັດທະນາສະໜາມຂີ້ເຫຍື້ອ ແລະ ການຄຸ້ມຄອງສິ່ງເສດເຫຼືອ, ການຄວບຄຸມຢາຂ້າຫຍ້າ ແລະ ການບຳບັດສິ່ງເສດເຫຼືອຈາກໂຮງໝໍ; (3) ປັບປຸງ ແລະ ຈັດຕັ້ງປະຕິບັດຫຼັກສູດການຮຽນການສອນແຫ່ງຊາດສຳລັບສິ່ງແວດລ້ອມ ແຕ່ຊັ້ນອານຸບານຈົນຮອດມະຫາວິທະຍາໄລ ປີທີ 3; (4) ການປູກຈິດສຳນຶກດ້ານສິ່ງແວດລ້ອມຜ່ານສື່ຕ່າງໆ, ການແຂ່ງຂັນ ແລະ ການໃຫ້ລາງວັນຊົມເຊີຍ; (5) ການຮ່ວມມື ແລະ ການຈັດຕັ້ງປະຕິບັດແຜນການຈັດສັນທີ່ດິນ, ການຄຸ້ມຄອງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມແບບຮອບດ້ານໃນຂັ້ນສູນກາງ ແລະ ຂັ້ນແຂວງ; (6) ສ້າງຄວາມເຂັ້ມແຂງໃນການຄຸ້ມຄອງສິ່ງແວດລ້ອມຂອງໂຄງການລົງທຶນ, ການປະເມີນສິ່ງແວດລ້ອມແບບຍຸດທະສາດ ແລະ ການຄຸ້ມຄອງທຸລະກິດລະດັບຄົວເຮືອນ; (7) ສ້າງຄວາມເຂັ້ມແຂງໃນການກວດກາຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ສ້າງເຄືອຄ່າຍໃນການຄວບຄຸມມົນລະພິດຂັ້ນສູນກາງ, ຂັ້ນແຂວງ ແລະ ຂັ້ນເມືອງ; ແລະ (8) ສ້າງເຄືອຄ່າຍ ແລະ ຍົກຂີດຄວາມສາມາດການວິເຄາະໃນຫ້ອງທົດລອງ ແລະ ການວິເຄາະລະດັບຊາດ, ພາກພື້ນ,

ແຂວງ ແລະ ເມືອງ ດ້ວຍການສະໜັບສະໜູນອຸປະກອນ ແລະ ກິດຈະກຳຄົ້ນຄວ້າທີ່ກ່ຽວຂ້ອງກັບການປ່ຽນແປງດິນຟ້າອາກາດ ທີ່ເຊື່ອມໂຍງກັບອຸທົກກະສາດ ແລະ ສະພາບແຫ້ງແລ້ງຂອງດິນ ແລະ ອື່ນໆຕາມຄວາມຈຳເປັນ.

ໃນໄລຍະຜ່ານມາ (2016-2020) ກປສ ໄດ້ສະໜອງທຶນດ້ານສິ່ງແວດລ້ອມ ລວມທັງຄວບຄຸມມົນລະພິດໃຫ້ພາກສ່ວນຕ່າງໆ ທັງສູນກາງ ແລະ ທ້ອງຖິ່ນ ລວມທັງໝົດ 28 ໂຄງການ (ຂັ້ນແຂວງ 26 ໂຄງການ, ແລະ ຂັ້ນສູນກາງ 3 ໂຄງການ) ໂດຍການສະໜອງທຶນໃຫ້ແກ່ການຄຸ້ມຄອງສິ່ງເສດເຫຼືອ ແລະ ສານເຄມີ ເຊັ່ນ: ສ້າງສະໜາມຂີ້ເຫຍື້ອຂັ້ນເມືອງ 14 ແຫ່ງ (ເມືອງວຽງພູຄາ ແຂວງ ຫຼວງນ້ຳທາ, ເມືອງຂວາ, ເມືອງສຳພັນ ແຂວງຜົ້ງສາລີ, ເມືອງນາໝໍ້ ແຂວງອຸດົມໄຊ, ເມືອງຕົ້ນເຜີ້ງ, ເມືອງປາກທາ ແຂວງບໍ່ແກ້ວ, ເມືອງຄູນ ແຂວງຊຽງຂວາງ, ເມືອງຊຽງເງິນ ແຂວງໄຊຍະບູລີ, ເມືອງມະຫາໄຊ ແຂວງຄຳມ່ວນ, ເມືອງອາດສະພັງທອງ, ທ່າປາງທອງ, ໄຊບູລີ ແຂວງສະຫວັນນະເຂດ, ເມືອງດາກຈຶງ ແຂວງເຊກອງ, ເມືອງວັງວຽງ ແລະ ເມືອງເຟືອງ ແຂວງວຽງຈັນ), ສະໜັບສະໜູນການຄຸ້ມຄອງຢາປາບສັດຕູພືດ ໃນ 7 ແຂວງ (5 ແຂວງພາກເໜືອ: ແຂວງບໍ່ແກ້ວ, ຜົ້ງສາລີ, ອຸດົມໄຊ, ໄຊຍະບູລີ ຫຼວງນ້ຳທາ ແລະ 2 ແຂວງ ພາກກາງ: ແຂວງ ຄຳມ່ວນ ແລະ ສະຫວັນນະເຂດ). ນອກນັ້ນ, ສະໜັບສະໜູນ ຄະນະວິທະຍາສາດທຳມະຊາດ, ມະຫາວິທະຍາໄລແຫ່ງຊາດ ໃນການສ້າງຄູ່ມືສຳລັບຄູຝຶກກ່ຽວກັບ ການນຳໃຊ້ຢາປາບສັດຕູພືດ ແລະ ສານເຄມີ, ສະໜັບສະໜູນຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມເມືອງ ແລະ ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແຂວງ ໃນວຽກປູກຈິດສຳນຶກ ກ່ຽວກັບສິ່ງແວດລ້ອມ ແລະ ສ້າງຕົວເມືອງ ສີຂຽວ ສະອາດ ງາມຕາ ໃຫ້ 3 ແຂວງ (ແຂວງ ຫຼວງນ້ຳທາ, ຫົວພັນ ແລະ ແຂວງ ຈຳປາສັກ).

ໂດຍອີງໃສ່ບົດລາຍງານສະພາບສິ່ງແວດລ້ອມແຫ່ງຊາດ ເຫັນວ່າ ສະພາບປະລິມານຂີ້ເຫຍື້ອແຕ່ລະປະເພດຍັງເພີ່ມຂຶ້ນ, ສະຖານທີ່ເກັບມ້ຽນ ແລະ ກຳຈັດຂີ້ເຫຍື້ອ ຢູ່ໃນແຕ່ລະແຂວງໃນຂອບເຂດທົ່ວປະເທດ ຍັງຈຳກັດບໍ່ທັນພຽງພໍກັບປະລິມານຂີ້ເຫຍື້ອທີ່ຕ້ອງການກຳຈັດ, ຍັງບໍ່ທັນມີລະບົບການຄຸ້ມຄອງຂີ້ເຫຍື້ອອຸດສາຫະກຳອັນຕະລາຍ, ບໍ່ມີລະບົບການຄຸ້ມຄອງທີ່ຮັດກຸມຈາກໜ່ວຍງານພາກລັດ ແລະ ເອກະຊົນ, ຄວາມຮູ້ ແລະ ຄວາມສາມາດຂອງຊັບພະຍາກອນມະນຸດຍັງຈຳກັດ ແລະ ຂາດແຄນງົບປະມານ ໃນການຈັດຕັ້ງປະຕິບັດ, ການຈັດຕັ້ງປະຕິບັດ ຫຼືບັງຄັບໃຊ້ນິຕິກຳຍັງບໍ່ທັນມີຜົນສັກສິດ, ນິຕິກຳ ຍັງມີຊ່ອງຫວ່າງ, ບໍ່ມີນິຕິກຳສະເພາະ ໃນການຄຸ້ມຄອງສິ່ງເສດເຫຼືອແຕ່ລະປະເພດ, ຍັງບໍ່ທັນມີລະບົບ ແລະ ກົນໄກໃນການຄຸ້ມຄອງຂີ້ເຫຍື້ອ ແລະ ສິ່ງເສດເຫຼືອແຕ່ລະປະເພດ ທີ່ມີປະສິດທິຜົນ ຊຶ່ງໃນຕໍ່ໜ້າ ຕ້ອງໄດ້ເອົາໃຈໃສ່ ໃນການປັບປຸງແກ້ໄຂ ເພື່ອໃຫ້ສາມາດຄຸ້ມຄອງບັນຫາ ຂີ້ເຫຍື້ອໃນຂອບເຂດທົ່ວປະເທດ ໄດ້ຢ່າງມີປະສິດທິຜົນ. ສະນັ້ນ, ໃນຊຸມປີຕໍ່ໜ້າ (2022-2025) ການສະໜອງທຶນ ຂອງ ກປສ ສຳລັບຮ່ວງທຶນດ້ານສິ່ງແວດລ້ອມ ລວມທັງຄວບຄຸມມົນລະພິດ ຈະເພີ່ມງົບປະມານຂຶ້ນ (ຈາກ 10% ມາເປັນ 20%) ຊຶ່ງໄດ້ກຳນົດກອບການສະໜອງທຶນ ດັ່ງນີ້:

1) ຈັດຕັ້ງປະຕິບັດກົນໄກການສົ່ງເສີມ ການນຳໃຊ້ຊັບພະຍາກອນທຳມະຊາດທີ່ມີປະສິດທິຜົນ, ການນຳໃຊ້ເຕັກໂນໂລຊີທີ່ເປັນມິດຕໍ່ສິ່ງແວດລ້ອມ ແລະ ການຜະລິດທີ່ສະອາດ;
2) ສືບຕໍ່ຍົກສູງຂະບວນການສຶກສາ, ໂຄສະນາເຜີຍແຜ່ ແລະ ສ້າງຈິດສຳນຶກກ່ຽວກັບການປົກປັກຮັກສາສິ່ງແວດລ້ອມ, ການກຳຈັດຂີ້ເຫຍື້ອ ແລະ ການນຳໃຊ້ຊັບພະຍາກອນທຳມະຊາດແບບຍືນຍົງ;
3) ຈັດຕັ້ງປະຕິບັດນິຕິກຳ, ມາດຕະຖານຄຸນນະພາບສິ່ງແວດລ້ອມແຫ່ງຊາດ, ຄູ່ມືແນະນຳ ແລະ ກົນໄກສຳລັບການປ້ອງກັນ, ຄວບຄຸມ ແລະ ຕິດຕາມກວດກາມົນລະພິດ (ດິນ, ນ້ຳ, ອາກາດ ແລະ ສຽງ) ໃຫ້ມີປະສິດທິພາບ ແລະ ປະສິດທິຜົນໃນຂອບເຂດທົ່ວປະເທດ;
4) ຄຸ້ມຄອງ, ຕິດຕາມກວດກາດ້ານສິ່ງແວດລ້ອມເຊັ່ນ: ສິ່ງເສດເຫຼືອ, ສານເຄມີທີ່ເປັນພິດອັນຕະລາຍ, ມົນລະພິດທາງອາກາດ, ມົນລະພິດທາງສຽງ, ການປ່ອຍນ້ຳເສຍຈາກຊຸມຊົນ ແລະ ໂຮງງານອຸດສາຫະກຳຕ່າງໆ;

5) ຜັນຂະຫຍາຍການຈັດຕັ້ງປະຕິບັດໂຄງການຂຽວ ສະອາດ ງາມຕາ ໂດຍການມີສ່ວນຮ່ວມຂອງພາກລັດ ແລະ ເອກະຊົນ ແລະ ແນວຄວາມຄິດ 3Rs (ຫຼຸດຜ່ອນ, ນຳໃຊ້ຄືນ, ໝູນໃຊ້ຄືນ) ໃນຄົວເຮືອນ ພ້ອມທັງປັບປຸງລະບົບການຄຸ້ມຄອງ ແລະ ກຳຈັດສິ່ງເສດເຫຼືອໃນເຂດຕົວເມືອງໃຫຍ່ ແລະ ເຂດຊົນນະບົດ;

6) ສົ່ງເສີມອຸດສາຫະກຳປຸງແຕ່ງຂະໜາດນ້ອຍ ແລະ ກາງ ຕາມທິດສີຂຽວ ແລະ ຍືນຍົງ ໂດຍສະເພາະກະສິກຳສະອາດ ແລະ ກະສິກຳປອດສານພິດ;

7) ຊຸກຍູ້ການທ່ອງທ່ຽວແບບອະນຸລັກ ແລະ ປະຊາຊົນມີສ່ວນຮ່ວມໃນການປົກປັກຮັກສາທຳມະຊາດ, ນຳໃຊ້ພະລັງງານ ແບບປະຢັດ, ເປັນມິດກັບສິ່ງແວດລ້ອມ, ຫຼຸດຜ່ອນສິ່ງເສດເຫຼືອ ແລະ ອື່ນໆ.

8) ກິດຈະກຳອື່ນໆ ທີ່ໄດ້ຮັບການພິຈາລະນາອະນຸມັດຈາກ ສະພາບໍລິຫານ ກປສ.

## 4.4. ການສະໜອງທຶນຜ່ານຮ່ວງທຶນຄຸ້ມຄອງຊັບພະຍາກອນນ້ຳແບບຍືນຍົງ (WRM)

ຈຸດປະສົງຫຼັກຂອງການສະໜອງທຶນຜ່ານຮ່ວງທຶນຄຸ້ມຄອງຊັບພະຍາກອນນ້ຳແບບຍືນຍົງ ໂດຍອີງຕາມຂໍ້ຕົກລົງວ່າດ້ວຍການຄຸ້ມຄອງ ກປສ (ປີ 2021) ແມ່ນເພື່ອສະໜັບສະໜູນການຈັດຕັ້ງປະຕິບັດວຽກງານຄື: (1) ການພັດທະນາ ແລະ ການຈັດຕັ້ງປະຕິບັດແຜນຄຸ້ມຄອງຊັບພະຍາກອນນ້ຳສຳລັບ 62 ອ່າງ ໃນລະດັບຊາດ, ແຂວງ ແລະ ທ້ອງຖິ່ນ; (2) ສ້າງຄວາມເຂັ້ມແຂງດ້ານເຕັກນິກວິຊາການ ແລະ ອຳນວຍຄວາມສະດວກໃຫ້ແກ່ເຄືອຄ່າຍກ່ຽວກັບການຄຸ້ມຄອງ, ການຕິດຕາມປະລິມານ ແລະ ຄຸນນະພາບນ້ຳໃນແມ່ນ້ຳສາຍຫຼັກ; (3) ສ້າງຄວາມເຂັ້ມແຂງໃຫ້ແກ່ລະບົບການຄຸ້ມຄອງ ແລະ ຕິດຕາມກ່ຽວກັບໄພນ້ຳຖ້ວມ, ໄພແຫ້ງແລ້ງ, ດິນທາມ ແລະ ນ້ຳໃຕ້ດິນ; ແລະ (4) ພັດທະນາ ແລະ ປັບປຸງຫຼັກສູດການສຶກສາສາມັນກ່ຽວກັບຊັບພະຍາກອນນ້ຳ ແລະ ການປູກຈິດສຳນຶກໃຫ້ແກ່ຂະແໜງການລັດ ແລະ ເອກກະຊົນ ເພື່ອປະກອບສ່ວນເຂົ້າໃນການຄຸ້ມຄອງຊັບພະຍາກອນນ້ຳ.

ໃນໄລຍະຜ່ານມາ (2016-2020) ກປສ ໄດ້ສະໜອງທຶນດ້ານສິ່ງແວດລ້ອມ ລວມທັງຄວບຄຸມມົນລະພິດໃຫ້ພາກ ສ່ວນຕ່າງໆ ທັງສູນກາງ ແລະ ທ້ອງຖິ່ນ ລວມທັງໝົດ 10 ໂຄງການ (ຂັ້ນແຂວງ 9 ໂຄງການ, ແລະ ຂັ້ນສູນກາງ 1ໂຄງການ) ໂດຍໄດ້ສະໜອງທຶນໃນການຄຸ້ມຄອງອ່າງຮັບນ້ຳ ຈຳນວນ 4 ອ່າງ ໃນ 5 ແຂວງ ແລະ 1 ໜອງນ້ຳ ຄື: ອ່າງຮັບນ້ຳຊຳ ແຂວງຫົວພັນ, ອ່າງຮັບນ້ຳເທີນ-ນ້ຳກະດິງ ແຂວງບໍລິຄຳໄຊ, ອ່າງຮັບນ້ຳເທີນ-ນ້ຳກະດິງ ແຂວງຄຳມ່ວນ, ອ່າງນ້ຳທາດ ແຂວງບໍ່ແກ້ວ ແລະ ອ່າງຮັບນ້ຳເຊທາມວກ ແຂວງສະຫວັນນະເຂດ, ອະນຸລັກແຫລ່ງນ້ຳໜອງຟ້າ ແຂວງອັດຕະປື ຊຶ່ງໄດ້ສະໜັບສະໜູນກິດຈະກຳຕ່າງໆ ເຊັ່ນ: ເຜີຍແຜ່ກົດໝາຍວ່າດ້ວຍ ການຄຸ້ມຄອງຊັບພະຍາກອນນ້ຳ, ປູກຈິດສຳນຶກ, ສ້າງແຜນຄຸ້ມຄອງອ່າງຮັບນ້ຳຂັ້ນແຂວງ, ກວດກາຄຸນນະພາບນ້ຳ, ເກັບຕົວຢ່າງນ້ຳເພື່ອວິໄຈ ເພື່ອລາຍງານໃນຂັ້ນແຂວງ ແລະ ສົ່ງຕົວຢ່າງມາວິໄຈຢູ່ສູນກາງ, ສ້າງຖານຂໍ້ມູນ ແລະ ສ້າງຄວາມເຂັ້ມແຂງໃຫ້ພະນັກງານ ຫຊສ ເມືອງ, ພຊສ ແຂວງ, ສູນກາງ ແລະ ຊຸມຊົນ.

ໂດຍອີງໃສ່ບົດລາຍງານສະພາບສິ່ງແວດລ້ອມແຫ່ງຊາດ ເຫັນວ່າ ຍັງມີສະພາບຄວາມຕ້ອງການນຳໃຊ້ນ້ຳ ແລະ ຊັບພະຍາກອນແຫຼ່ງນ້ຳເພີ່ມຂຶ້ນ, ມີການປ່ອຍນ້ຳເປື້ອນຈາກຕົວເມືອງ ແລະ ຊຸມຊົນນັບມື້ເພີ່ມຂຶ້ນ ເຮັດໃຫ້ເກີດມົນລະພິດທາງນ້ຳ, ນ້ຳເປື້ອນຈາກຂະການແໜງການອຸດສາຫະກຳ, ກະສິກຳ ແລະ ການບໍລິການ ນັບມື້ນັບເພີ່ມຂຶ້ນ, ໂຮງງານອຸດສາຫະກຳມີການປ່ອຍນ້ຳເປື້ອນເພີ່ມຂຶ້ນ, ບາງໂຄງການບໍ່ມີສະຖານທີ່ບຳບັດນ້ຳເປື້ອນ ກ່ອນທີ່ຈະປ່ອຍລົງສູ່ຄອງລະບາຍນ້ຳເປື້ອນ, ບໍ່ມີລະບົບການຕິດຕາມກວດກາຄຸນນະພາບນ້ຳ ທີ່ທັນສະໄໝ, ບໍ່ທັນມີການປະເມີນຄວາມຕ້ອງການນຳໃຊ້ນ້ຳ ໃນແຕ່ລະຂະແໜງການ, ຂາດບຸກຄະລາກອນທີ່ມີຄຸນນະພາບ ແລະ ອຸປະກອນ/ເຄື່ອງມື ເພື່ອຕິດຕາມກວດກາຄຸນນະພາບນ້ຳ ຊຶ່ງໃນຕໍ່ໜ້າຕ້ອງໄດ້ເອົາໃຈໃສ່ ໃນການປັບປຸງແກ້ໄຂ ເພື່ອໃຫ້ສາມາດຄຸ້ມຄອງຊັບພະຍາກອນນ້ຳໃນຂອບເຂດທົ່ວປະເທດ ໄດ້ຢ່າງມີປະສິດທິຜົນ. ສະນັ້ນ, ໃນຊຸມປີຕໍ່ໜ້າ

(2022-2025) ການສະໜອງທຶນ ຂອງ ກປສ ສຳລັບ ຮ່ວງທຶນຄຸ້ມຄອງຊັບພະຍາກອນນ້ຳ ຈະເພີ່ມງົບປະມານຂຶ້ນ (ຈາກ 5% ມາເປັນ 10%) ຊຶ່ງໄດ້ກຳນົດກອບການສະໜອງທຶນ ດັ່ງນີ້:

1) ຄຸ້ມຄອງ ແລະ ຮັກສາແຫຼ່ງນ້ຳ ດ້ວຍການຊຸກຍູ້ສົ່ງເສີມການສ້າງກົນໄກປະສານງານໃນການຄຸ້ມຄອງ, ຈັດສັນ ແລະ ນຳໃຊ້ນ້ຳແບບມີສ່ວນຮ່ວມຂອງຫຼາຍຂະແໜງການ ແລະ ທ້ອງຖິ່ນລວມທັງປະຊາຊົນ;
2) ປົກປັກຮັກສາ ແລະ ປັບປຸງຄຸນນະພາບຂອງປ່າຍອດນ້ຳ/ແຫຼ່ງນ້ຳ ທີ່ຕິດພັນກັບອ່າງຮັບນ້ຳ ໂດຍຈັດຕັ້ງຜັນຂະຫຍາຍ ຍຸດທະສາດນ້ຳ ແລະ ຊັບພະຍາກອນນ້ຳແຫ່ງຊາດ ແລະ ແຜນການຄຸ້ມຄອງອ່າງຮັບນ້ຳ;
3) ປົກປັກຮັກສາ, ປັບປຸງ ແລະ ຂະຫຍາຍອ່າງເກັບນ້ຳທຳມະຊາດ (ຫ້ວຍ, ໜອງ, ຄອງ, ບຶງ) ໃຫ້ມີປະສິດທິພາບສູງຂຶ້ນ ແລະ ມີຄວາມຍືນຍົງ;
4) ປົກປັກຮັກສາຄຸນນະພາບນ້ຳ ແລະ ສ້າງແຜນຄຸ້ມຄອງ, ຈັດສັນ ແລະ ນຳໃຊ້ນ້ຳ ແລະ ຊັບພະຍາກອນນ້ຳຢ່າງມີປະສິດທິພາບ, ປະສິດທິຜົນ ແລະ ຍືນຍົງ;
5) ຕິດຕາມກວດກາຄຸນນະພາບນ້ຳໜ້າດິນ ແລະ ນ້ຳໃຕ້ດິນ ພ້ອມທັງລາຍງານສະພາບຄຸນນະພາບນ້ຳ;
6) ກຳນົດເຂດດິນບໍລິເວນນ້ຳ ແລະ ເຂດທີ່ຈະພັດທະນາເຂື່ອນໄຟຟ້ານ້ຳຕົກເຂົ້າໃນແຜນຈັດສັນທີ່ດິນ, ຄຸ້ມຄອງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແບບຮອບດ້ານ;
7) ສ້າງລະບົບຖານຂໍ້ມູນໃນການຄຸ້ມຄອງ ແລະ ນຳໃຊ້ນ້ຳໃນແຕ່ລະຂະແໜງການ;
8) ສຳຫຼວດ ແລະ ກຳນົດເຂດຊັບພະຍາກອນນ້ຳໃຕ້ດິນ;
9) ສ້າງຄວາມເຂັ້ມແຂງທາງດ້ານການຈັດຕັ້ງ ແລະຍົກລະດັບຄວາມຮູ້ຄວາມສາມາດຂອງບຸກຄະລາກອນໃນຂະແໜງຊັບພະຍາກອນນ້ຳ ໃນຂັ້ນສູນກາງ ແລະ ທ້ອງຖິ່ນ ກ່ຽວກັບການຄຸ້ມຄອງຊັບພະຍາກອນນ້ຳ;
10) ກິດຈະກຳອື່ນໆ ທີ່ໄດ້ຮັບການພິຈາລະນາອະນຸມັດຈາກ ສະພາບໍລິຫານ ກປສ.

### 4.5. ການສະໜອງທຶນຜ່ານຮ່ວງທຶນການຄຸ້ມຄອງທີ່ດິນແບບຍືນຍົງ (SLM)

ຈຸດປະສົງຫຼັກຂອງການສະໜອງທຶນຜ່ານຮ່ວງທຶນການຄຸ້ມຄອງທີ່ດິນແບບຍືນຍົງ ໂດຍອີງຕາມຂໍ້ຕົກລົງວ່າດ້ວຍການຄຸ້ມຄອງ ກປສ (ປີ 2021) ແມ່ນເພື່ອສະໜັບສະໜູນການຈັດຕັ້ງປະຕິບັດວຽກງານຄື: (1) ພັດທະນາ, ປູກຈິດສຳນຶກ ແລະ ຈັດຕັ້ງປະຕິບັດແຜນແມ່ບົດການຄຸ້ມຄອງທີ່ດິນແຫ່ງຊາດ; (2) ອອກໃບຕາດິນທົ່ວປະເທດ; ແລະ (3) ພັດທະນາການປະເມີນທີ່ດິນໃນທົ່ວປະເທດ.

ໃນໄລຍະຜ່ານມາ (2016-2020) ກປສ ໄດ້ສະໜອງທຶນຜ່ານຮ່ວງທຶນການຄຸ້ມຄອງທີ່ດິນແບບຍືນຍົງ ໃຫ້ພາກສ່ວນ ຕ່າງໆທັງສູນກາງ ແລະ ທ້ອງຖິ່ນ ລວມທັງໝົດ 9 ໂຄງການ (ຂັ້ນສູນກາງ 6 ໂຄງການ ແລະ ຂັ້ນແຂວງ 3 ໂຄງການ) ໂດຍໄດ້ສະໜອງທຶນໃຫ້ ກົມທີ່ດິນ ແລະ ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ນະຄອນຫຼວງວຽງຈັນ, ແຂວງບໍ່ແກ້ວ ແລະ ແຂວງຫລວງນ້ຳທາ ໂດຍໄດ້ສະໜັບສະໜູນກິດຈະກຳ ເຊັ່ນ: ປັບປຸງ ແລະ ໂຄສະນາເຜີຍແຜ່ກົດໝາຍວ່າດ້ວຍທີ່ດິນ, ຝຶກອົບຮົມດ້ານວິຊາການກ່ຽວກັບການອອກໃບຕາດິນ, ສຳຫຼວດ ແລະ ຈັດສັນທີ່ດິນ ຂັ້ນເມືອງ, ບ້ານ, ປັກຫຼັກໝາຍເຂດສະຫງວນໜອງບຶງທຳມະຊາດໃນເຂດນະຄອນຫຼວງວຽງຈັນ ແລະ ກິດຈະກຳອື່ນໆ.

ໂດຍອີງໃສ່ບົດລາຍງານສະພາບສິ່ງແວດລ້ອມແຫ່ງຊາດ ເຫັນວ່າການຄຸ້ມຄອງທີ່ດິນກໍຍັງເກີດມີຫຼາຍບັນຫາສັບສົນ ເປັນຕົ້ນແມ່ນການຫັນປ່ຽນປະເພດທີ່ດິນ ຍັງບໍ່ທັນໄດ້ປະຕິບັດຕາມກົດໝາຍຢ່າງເຂັ້ມງວດ ຍ້ອນວ່າການວາງແຜນນຳໃຊ້ທີ່ດິນຂອງຂະແໜງການ ຍັງບໍ່ທັນສຳເລັດ ຈຶ່ງເປັນສາເຫດໃຫ້ເກີດມີຊ່ອງຫວ່າງໃນການນຳ

ໃຊ້ທີ່ດິນ ທີ່ມີລັກສະນະຟຸມເຟືອຍ, ມີການຈັບຈອງທີ່ດິນປ່າໄມ້ສາທາລະນະຢ່າງຊະຊາຍ, ມີການຫຼົບຫຼີກການເສຍຄ່າທຳນຽມທີ່ດິນດ້ວຍຮູບການຕ່າງໆ, ການຕົກລົງແບ່ງປັນທີ່ດິນລັດໃຫ້ບຸກຄົນຖືສິດນຳໃຊ້ຂາດຕົວ ທີ່ບໍ່ຖືກຕ້ອງຕາມກົດໝາຍເກີດຂຶ້ນຢ່າງແຜ່ຫຼາຍ ຊຶ່ງມີຄວາມຈຳເປັນຕ້ອງໄດ້ແກ້ໄຂໂດຍໄວ. ສະນັ້ນ, ມີຄວາມຈຳເປັນຕ້ອງສືບຕໍ່ສະໜອງທຶນໃຫ້ແກ່ວຽກງານການຄຸ້ມຄອງທີ່ດິນແບບຍືນຍົງ. ເຖິງແມ່ນວ່າ ປະຈຸບັນມີຫຼາຍອົງການຈັດຕັ້ງສາກົນໄດ້ໃຫ້ທຶນສະໜັບສະໜູນການຈັດຕັ້ງປະຕິບັດວຽກງານດັ່ງກ່າວ ເຊັ່ນ: ໂຄງການສ້າງຄວາມເຂັ້ມແຂງໃນການຂຶ້ນທະບຽນອອກໃບຕາດິນຢ່າງເປັນລະບົບ ESLRP ທີ່ໄດ້ຮັບການຊ່ວຍເຫຼືອຈາກທະນາຄານໂລກ ແລະ ໂຄງການອື່ນໆ ແຕ່ກໍ່ຍັງບໍ່ພຽງພໍກັບຄວາມຕ້ອງການ ແລະ ວຽກງານການຄຸ້ມຄອງທີ່ດິນ ເປັນແຜນວຽກບູລິມະສິດທີ່ນອນຢູ່ໃນວາລະແຫ່ງຊາດ ທີ່ຈະຕ້ອງໄດ້ສຸມໃສ່ແກ້ໄຂ. ສະນັ້ນ, ໃນຊຸມປີຕໍ່ໜ້າ (2022-2025) ການສະໜອງທຶນ ຂອງ ກປສ ສຳລັບຮ່ວງທຶນດ້ານການຄຸ້ມຄອງທີ່ດິນແບບຍືນຍົງ ຈະເພີ່ມງົບປະມານຂຶ້ນ (ຈາກ 10% ມາເປັນ 15%) ຊຶ່ງໄດ້ກຳນົດກອບການສະໜອງທຶນ ດັ່ງນີ້:

1) ໂຄສະນາເຜີຍແຜ່ ແລະ ຈັດຕັ້ງປະຕິບັດກົດໝາຍວ່າດ້ວຍທີ່ດິນ, ກົດໝາຍວ່າດ້ວຍສິ່ງແວດລ້ອມ, ມະຕິຕົກລົງ ແລະ ຄຳສັ່ງຕ່າງໆຢ່າງເຂັ້ມງວດ ແລະ ສົ່ງເສີມລະບົບການຄຸ້ມຄອງບໍລິຫານທີ່ດິນແບບທັນສະໄໝ;
2) ສຳຫຼວດ ແລະ ເກັບຂໍ້ມູນ ການນຳໃຊ້ທີ່ດິນໃນເຂດປ່າສະຫງວນ ແລະ ປ່າປ້ອງກັນ ພ້ອມທັງກຳນົດມາດຕະການໃນການແກ້ໄຂ;
3) ການປະເມີນລາຄາທີ່ດິນ, ການຂຶ້ນສຳມະໂນຄົວຕອນດິນ ແລະ ການອອກໃບຕາດິນ ໃຫ້ສຳເລັດໃນຂອບເຂດທົ່ວປະເທດ;
4) ການຕິດຕາມກວດກາ ແລະ ວັດແທກຄືນ ກ່ຽວກັບຂອບເຂດ ການເຊົ່າສຳປະທານດິນໃຫ້ມີປະສິດທິຜົນພ້ອມທັງບັນທຶກຂໍ້ມູນເຂົ້າໃນລະບົບແຜນທີ່;
5) ສ້າງຄວາມເຂັ້ມແຂງທາງດ້ານການຈັດຕັ້ງ ແລະ ຍົກລະດັບຄວາມຮູ້ຄວາມສາມາດຂອງບຸກຄະລາກອນໃນຂະແໜງການທີ່ດິນ ແລະ ຂະແໜງອື່ນທີ່ກ່ຽວຂ້ອງ;
6) ກິດຈະກຳອື່ນໆ ທີ່ໄດ້ຮັບການພິຈາລະນາອະນຸມັດຈາກ ສະພາບໍລິຫານ ກປສ.

### 4.6. ການສະໜອງທຶນຜ່ານຮ່ວງທຶນການປ່ຽນແປງດິນຟ້າອາກາດ (CC)

ຈຸດປະສົງຫຼັກຂອງການສະໜອງທຶນຜ່ານຮ່ວງທຶນ ການປ່ຽນແປງດິນຟ້າອາກາດ ໂດຍອີງຕາມຂໍ້ຕົກລົງວ່າດ້ວຍການຄຸ້ມຄອງ ກປສ (ປີ 2021) ແມ່ນເພື່ອສະໜັບສະໜູນການຈັດຕັ້ງປະຕິບັດວຽກງານຄື: ການສ້າງຄວາມເຂັ້ມແຂງໃນການເກັບກຳຂໍ້ມູນ, ສ້າງນິຕິກຳ ແລະ ການປະຕິບັດວຽກງານກ່ຽວກັບການຫຼຸດຜ່ອນ ແລະ ແກ້ໄຂການປ່ຽນປ່ຽນດິນຟ້າອາກາດ ລວມທັງການປັບໂຕເຂົ້າກັບການປ່ຽນແປງດິນຟ້າອາກາດ, ການຫຼຸດຜ່ອນການປ່ອຍທາດອາຍເຮືອນແກ້ວ ແລະ ສະໜັບສະໜູນການຕ້ານໄພແຫ້ງແລ້ງ ແລະ ນ້ຳຖ້ວມ.

ໃນໄລຍະຜ່ານມາ (2019-2021) ກປສ ໄດ້ສະໜອງທຶນດ້ານການປ່ຽນແປງດິນຟ້າອາກາດ ໃຫ້ພາກສ່ວນຕ່າງໆ ທັງສູນກາງ ແລະ ທ້ອງຖິ່ນ ລວມທັງໝົດ 2 ໂຄງການ (ຂັ້ນສູນກາງ 2 ໂຄງການ) ສະໜອງທຶນໃຫ້ ກົມພັດທະນາແມ່ຍິງລາວ, ສູນກາງສະຫະພັນແມ່ຍິງລາວ ແລະ ກົມການທະຫານທ້ອງຖິ່ນ, ກະຊວງປ້ອງກັນປະເທດ ຊຶ່ງໄດ້ສະໜັບສະໜູນກິດຈະກຳຕ່າງໆ ເຊັ່ນ: ໂຄສະນາເຜີຍແຜ່, ປູກຈິດສຳນຶກ, ຝຶກອົບຮົມຂັ້ນບ້ານກ່ຽວກັບການຫຼຸດຜ່ອນຄວາມສ່ຽງຈາກໄພພິບັດ ສູ່ການພັດທະນາແບບຍືນຍົງຕາມແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ສ້າງເຄືອຄ່າຍພື້ນທີ່ ທີ່ໄດ້ຮັບຜົນກະທົບຈາກໄພພິບັດ, ສຳຫຼວດເກັບກຳຂໍ້ມູນສະຖິຕິພົນລະເມືອງ, ສະຖິຕິໄພພິບັດ

ຈາກທຳມະຊາດ (ໄພນ້ຳຖ້ວມ), ປັບປຸງຄູ່ມືລະບົບການຮຽນຮູ້ ກ່ຽວກັບການປະຕິບັດການຕົວຈິງດ້ານບົດບາດຍິງ-ຊາຍ (GALS) ກັບການປ່ຽນແປງດິນຟ້າອາກາດ ແລະ ກິດຈະກຳອື່ນໆ.

ໂດຍອີງໃສ່ບົດລາຍງານສະພາບສິ່ງແວດລ້ອມແຫ່ງຊາດ ເຫັນວ່າ ສະພາບການປ່ຽນແປງດິນຟ້າອາກາດ ຢູ່ ສປປ ລາວ ຍັງປະເຊີນໜ້າກັບສິ່ງທ້າທາຍຫຼາຍດ້ານເປັນຕົ້ນ: ໄພພິບັດທາງທຳມະຊາດ (ພາຍຸ, ໄພແຫ້ງແລ້ງ, ໄພນ້ຳຖ້ວມ ແລະ ພະຍາດລະບາດ), ມາດຕະການປັບຕົວ ແລະ ການຮັບມືເຂົ້າກັບສະພາບການປ່ຽນແປງດິນຟ້າອາກາດ ແມ່ນຍັງບໍ່ທັນໄດ້ເຊື່ອມສານເຂົ້າກັບທຸກຂະແໜງການ ຊຶ່ງລັດຖະບານລາວ ຈະຕ້ອງໄດ້ສືບຕໍ່ປັບປຸງດ້ານນະໂຍ ບາຍ , ສ້າງຄວາມເຂັ້ມແຂງດ້ານອົງການຈັດຕັ້ງ ແລະ ບຸກຄະລາກອນ ແລະ ປັບປຸງກົນໄກໃນການຈັດຕັ້ງປະຕິບັດໃຫ້ໄດ້ດີກວ່າເກົ່າ. ສະນັ້ນ, ໃນ 5 ປີຕໍ່ໜ້າ (2021-2025) ການສະໜອງທຶນ ຂອງ ກປສ ສຳລັບຮ່ວງທຶນດ້ານການຄຸ້ມຄອງທີ່ດິນແບບຍືນຍົງ ຈະເພີ່ມງົບປະມານຂຶ້ນ (ຈາກ 5% ມາເປັນ 10%) ຊຶ່ງໄດ້ກຳນົດກອບການສະໜອງທຶນດັ່ງນີ້:

1) ສືບຕໍ່ຂະຫຍາຍການຈັດຕັ້ງປະຕິບັດຄາດໝາຍການຫຼຸດຜ່ອນອາຍເຮືອນແກ້ວ (NDC) ແລະ ກົນໄກການຫຼຸດຜ່ອນການປ່ອຍທາດອາຍເຮືອນແກ້ວເປັນຕົ້ນໂຄງການ REDD+ ເພື່ອປະກອບສ່ວນເຂົ້າໃນການຫຼຸດຜ່ອນການປ່ອຍທາດອາຍເຮືອນແກ້ວສາກົນ ສົ່ງເສີມທຸລະກິດທີ່ປ່ອຍທາດອາຍເຮືອນແກ້ວຕ່ຳ ເຂົ້າໃນການບັນເທົາການປ່ຽນແປງສະພາບດິນຟ້າອາກາດ, ການນຳໃຊ້ເຕັກນິກ ແລະ ເຕັກໂນໂລຊີທີ່ທັນສະໄໝ ທີ່ສ້າງສິ່ງເສດເຫຼືອໜ້ອຍ, ປະຢັດພະລັງງານ ແລະ ນຳໃຊ້ພະລັງງານທີ່ສະອາດ ເປັນມິດກັບສິ່ງແວດລ້ອມ;
2) ສົ່ງເສີມ ແລະ ຊຸກຍູ້ ຫັນເອົາວຽກງານການຄຸ້ມຄອງການປ່ຽນແປງດິນຟ້າອາກາດໃຫ້ເຂົ້າກັບນະໂຍບາຍ, ຍຸດທະສາດ, ແຜນດຳເນີນງານ ຂອງແຕ່ລະຂະແໜງການ;
3) ຈັດຕັ້ງປະຕິບັດແຜນງານຄົ້ນຄວ້າ ແລະ ເກັບກຳຂໍ້ມູນຄວາມສ່ຽງໄພພິບັດຢູ່ຂັ້ນສູນກາງ ແລະ ທ້ອງຖິ່ນເພື່ອປະເມີນຄວາມສ່ຽງ, ສ້າງແຜນທີ່ຄວາມສ່ຽງໄພພິບັດ, ສ້າງແຜນດຳເນີນງານແກ້ໄຂບັນຫາຄວາມສ່ຽງ ແລະ ຄວາມບອບບາງ ເພື່ອໃຊ້ເຂົ້າໃນການວາງແຜນຍຸດທະສາດ ແລະ ແຜນພັດທະນາເສດຖະກິດ - ສັງຄົມ ແຫ່ງຊາດ;
4) ສ້າງ ແລະ ຈັດຕັ້ງປະຕິບັດກິດຈະກຳປຸກຈິດສຳນຶກ ກ່ຽວກັບຜົນກະທົບຈາກການປ່ຽນແປງດິນຟ້າອາກາດ, ການປັບຕົວກັບການປ່ຽນແປງດິນຟ້າອາກາດ, ການຄຸ້ມຄອງ ແລະ ສະກັດກັ້ນໄພພິບັດທຳມະຊາດ ເພື່ອຮັບປະກັນການນຳໃຊ້ຊັບພະຍາກອນທ້ອງຖິ່ນຢ່າງມີປະສິດທິພາບ;
5) ຈັດຕັ້ງປະຕິບັດແຜນການຄຸ້ມຄອງ, ມາດຕະການປ້ອງກັນ ແລະ ສະກັດກັ້ນຕ້ານຜົນກະທົບການປ່ຽນແປງດິນຟ້າອາກາດ ແລະ ໄພພິບັດທຳມະຊາດທີ່ມີປະສິດທິພາບ ແລະ ປະສິດທິຜົນ, ສ້າງຄວາມເຂັ້ມແຂງໃນການພະຍາກອນນ້ຳຖ້ວມ, ໄພແຫ້ງແລ້ງ ແລະ ແຜ່ນດິນໄຫວ, ສືບຕໍ່ປັບປຸງລະບົບຕາໜ່າງສະຖານີອຸຕຸນິຍົມ ແລະ ອຸທົກກະສາດ ໃນຂອບເຂດທົ່ວປະເທດ, ປັບປຸງ ແລະ ຂະຫຍາຍລະບົບເຕືອນໄພລ່ວງໜ້າໃຫ້ຫຼາຍຂຶ້ນ;
6) ສ້າງຄວາມເຂັ້ມແຂງທາງດ້ານການຈັດຕັ້ງ ແລະ ຍົກລະດັບຄວາມຮູ້ຄວາມສາມາດຂອງບຸກຄະລາກອນໃນຂັ້ນສູນກາງ ແລະ ທ້ອງຖິ່ນ;
7) ກິດຈະກຳອື່ນໆ ທີ່ໄດ້ຮັບການພິຈາລະນາອະນຸມັດຈາກ ສະພາບໍລິຫານ ກປສ.

# V. ພາກສ່ວນທີ່ມີເງື່ອນໄຂຂໍນໍາໃຊ້ທຶນ ແລະ ມາດຖານການຄັດເລືອກ

## 5.1. ພາກສ່ວນທີ່ມີເງື່ອນໄຂຂໍນໍາໃຊ້ທຶນ.

ພາກສ່ວນທີ່ນອນໃນເງື່ອນໄຂ ກປສ ໃຫ້ການຊ່ວຍເຫຼືອ ມີດັ່ງນີ້:

1) ອົງການຈັດຕັ້ງຂອງລັດ ປະກອບມີ ກະຊວງ, ອົງການ, ແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ ແລະ ອົງການປົກຄອງທ້ອງຖິ່ນທຸກຂັ້ນທີ່ກ່ຽວຂ້ອງ;

2) ອົງການຈັດຕັ້ງສັງຄົມ.

## 5.2. ມາດຖານການຄັດເລືອກ.

ມາດຖານການຄັດເລືອກບົດສະເໜີໂຄງການມີດັ່ງນີ້:

1) ສອດຄ່ອງກັບນະໂຍບາຍຂອງລັດຖະບານ ແລະ ປະກອບສ່ວນເຂົ້າໃນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ 9 (2021-2025) ໃຫ້ໄປຕາມທິດສີຂຽວ ແລະ ຍືນຍົງ;

2) ສອດຄ່ອງກັບວິໄສທັດຮອດປີ 2030, ຍຸດທະສາດ ຮອດ 2025 ແລະ ແຜນການ 5 ປີ (2021-2025) ຂອງ ກປສ;

3) ສອດຄ່ອງກັບຂົງເຂດບູລິມະສິດ ແລະ ກອບການສະໜອງທຶນຂອງແຕ່ລະຮ່ອງທຶນ ທີ່ໄດ້ກໍານົດໄວ້ໃນຂໍ້ຕົກລົງວ່າດ້ວຍການຄຸ້ມຄອງກອງທຶນປົກປັກຮັກສາສິ່ງແວດລ້ອມ ສະບັບເລກທີ 02/ກປສ.ທກ, ລົງວັນທີ 09 ກຸມພາ 2021 ແລະ ນະໂຍບາຍສະໜອງທຶນສະບັບນີ້;

4) ພາກສ່ວນຂໍທຶນຕ້ອງຂຽນບົດສະເໜີໂຄງການ ສອດຄ່ອງກັບພາລະບົດບາດຂອງຕົນ ແລະ ແຜນບູລິມະສິດຂອງຂະແໜງການທີ່ກ່ຽວຂ້ອງ ແນໃສ່ຈັດຕັ້ງປະຕິບັດ ວຽກງານການຄຸ້ມຄອງຊັບພະຍາກອນທໍາມະຊາດ ແລະ ປົກປັກຮັກສາສິ່ງແວດລ້ອມ ຢ່າງມີປະສິດທິຜົນ;

5) ໂຄງການທີ່ສະເໜີມາຕ້ອງບໍ່ແມ່ນໂຄງການທີ່ຊໍ້າຊ້ອນກັບຜູ້ໃຫ້ທຶນອື່ນ (ໂຄງການດຽວໄດ້ທຶນຈາກຫຼາຍແຫຼ່ງ) ແລະ ຕ້ອງບໍ່ແມ່ນກິດຈະກໍາທີ່ຊໍ້າຊ້ອນກັບໂຄງການທີ່ພາກສ່ວນອື່ນກໍາລັງຈັດຕັ້ງປະຕິບັດຢູ່;

6) ພາກສ່ວນທີ່ເຄີຍນໍາໃຊ້ທຶນ ກປສ ທີ່ຈັດຕັ້ງປະຕິບັດໂຄງການບໍ່ສໍາເລັດ (ລົ້ມເຫຼວ) ໃນໄລຍະ 2 ປີ ຜ່ານມາຕາມການປະເມີນຂອງ ກປສ ຈະບໍ່ມີສິດສະເໜີຂໍທຶນໃໝ່ນໍາ ກປສ;

7) ແຕ່ລະພາກສ່ວນທີ່ຂໍນໍາໃຊ້ທຶນ (ກົມ, ກອງ ແລະ ອົງການຈັດຕັ້ງ ຫຼື ແຂວງ) ສາມາດສະເໜີຂໍນໍາໃຊ້ທຶນ ບໍ່ເກີນ 2 ໂຄງການ ຕໍ່ປີ. ກໍລະນີໂຄງການທີ່ກໍາລັງຈັດຕັ້ງປະຕິບັດ, ຖ້າຕ້ອງການສະເໜີຂໍໂຄງການໃໝ່ ຕ້ອງຈັດຕັ້ງປະຕິບັດກິດຈະກໍາໂຄງການໃຫ້ສໍາເລັດ ແລະ ເບີກຈ່າຍໃຫ້ໄດ້ຢ່າງໜ້ອຍ 80% ຂອງ ງົບປະມານໂຄງການທັງໝົດ;

8) ການສະເໜີຂໍນໍາໃຊ້ທຶນຕ້ອງສອດຄ່ອງກັບຂະໜາດໂຄງການ ແລະ ວົງເງິນທີ່ກໍານົດໄວ້ ໃນຂໍ້ III ຂອງນະໂຍບາຍ ສະບັບນີ້ ແລະ ປະກອບແບບຟອມຖືກຕ້ອງ ແລະ ຄົບຖ້ວນຕາມລະບຽບຂັ້ນຕອນ.

## 5.3. ການບໍ່ສະໜອງທຶນ

ບັນດາກິດຈະກໍາ ແລະ ພາກສ່ວນ ທີ່ບໍ່ມີເງື່ອນໄຂ ໄດ້ຮັບການສະໜອງທຶນຈາກ ກປສ ມີດັ່ງນີ້:

1) ການຈ່າຍເງິນເດືອນ ໃຫ້ແກ່ພະນັກງານ ຫຼື ເຈົ້າໜ້າທີ່ ສັງກັດຢູ່ໃນພາກສ່ວນທີ່ໄດ້ຮັບທຶນ;

2) ການຈັດຊື້ລົດຕາມທີ່ໄດ້ກຳນົດໄວ້ໃນຄຳສັ່ງຂອງນາຍົກລັດຖະມົນຕີ ສະບັບເລກທີ 09/ນຍ, ລົງວັນທີ 19 ພຶດສະພາ 2017 ວ່າດ້ວຍການປະຢັດ ແລະ ຕ້ານການຟຸມເຟືອຍ, ເວັ້ນເສຍແຕ່ຈະໄດ້ຮັບອະນຸຍາດຈາກ ສະພາບໍລິຫານ ກປສ ແລະ ລັດຖະບານ;
3) ການຈັດຊື້-ຈັດຈ້າງ ຫຼື ການຜະລິດສານເຄມີທີ່ເປັນພິດທີ່ເກືອດຫ້າມ ຢູ່ໃນລະດັບສາກົນ ແລະ ບໍ່ສອດຄ່ອງກັບກົດໝາຍຂອງ ສປປ ລາວ;
4) ກິດຈະກຳທີ່ບໍ່ສອດຄ່ອງກັບນະໂຍບາຍຂອງລັດ, ກົດໝາຍ ແລະ ລະບຽບການ ກ່ຽວກັບການນຳໃຊ້ຊັບພະຍາກອນທຳມະຊາດ, ການຄວບຄຸມມົນລະພິດ ແລະ ຄວາມຍືນຍົງ ທາງດ້ານສິ່ງແວດລ້ອມ ແລະ ສັງຄົມ ລວມທັງຜົນກະທົບທີ່ເປັນອັນຕະລາຍ ຕໍ່ຊີວິດ ແລະ ສຸຂະພາບຂອງມະນຸດ ໂດຍບໍ່ມີມາດຕະການທີ່ພຽງພໍ ເພື່ອຫຼຸດຜ່ອນຜົນກະທົບທາງລົບທີ່ຮ້າຍແຮງ;
5) ການຂຸດຄົ້ນໄມ້ທ່ອນ ແລະ ກິດຈະກຳອື່ນໆ ທີ່ອາດມີຜົນໃຫ້ແກ່ການລ່າ, ຊື້-ຂາຍ ສັດປ່າ ທີ່ຜິດກົດໝາຍ ຫຼື ກໍ່ໃຫ້ເກີດຜົນກະທົບທາງລົບທີ່ຮ້າຍແຮງຕໍ່ຊີວະນາໆພັນຂອງ ສປປ ລາວ ຫຼື ເປັນສາເຫດເຮັດໃຫ້ ສປປ ລາວ ບໍ່ສາມາດປະກອບສ່ວນ ຫຼື ປະຕິບັດພັນທະຂອງສົນທິສັນຍາສາກົນທີ່ ສປປ ລາວ ເຂົ້າເປັນພາຄີໄດ້ຢ່າງເຕັມສ່ວນ;
6) ໂຄງການລົງທຶນ ດ້ານໄຟຟ້ານ້ຳຕົກ, ດ້ານຂຸດຄົ້ນບໍ່ແຮ່, ດ້ານການທ່ອງທ່ຽວ, ດ້ານການປູກປ່າໄມ້ ແລະ ອື່ນໆ ເພື່ອນຳໄປໃຊ້ຈ່າຍໃນການຫຼຸດຜ່ອນ ຫຼື ຊົດເຊີຍ ຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມຂອງໂຄງການພັດທະນາດັ່ງກ່າວ;
7) ພາກສ່ວນທີ່ມີຄວາມສ່ຽງ ຫຼື ມີປະຫວັດ ກ່ຽວຂ້ອງກັບ ການກໍ່ການຮ້າຍ, ການຟອກເງິນ, ການຄ້າຂາຍມະນຸດ, ການຄ້າຂາຍອາວຸດ ແລະ ກິດຈະກຳອື່ນໆ ທີ່ຜິດຕໍ່ລະບຽບກົດໝາຍ.

## VI. ຂັ້ນຕອນການຍື່ນບົດສະເໜີຂໍທຶນນຳ ກປສ.

ພາກສ່ວນທີ່ມີຄວາມສົນໃຈສະເໜີຂໍນຳໃຊ້ທຶນ ສາມາດຍື່ນບົດສະເໜີໂຄງການ ຕາມແບບຟອມ ທີ່ ກປສ ໄດ້ກຳນົດໄວ້ ແລະ ຕ້ອງໄດ້ຜ່ານການຢັ້ງຢືນ ຈາກຂະແໜງການທີ່ກ່ຽວຂ້ອງ ກ່ຽວກັບ ຄວາມສອດຄ່ອງກັບ ແຜນການບູລິມະສິດຂອງຂະແໜງການຕົນ. ສຳລັບລາຍລະອຽດຂັ້ນຕອນການຍື່ນບົດສະເໜີໂຄງການແມ່ນອີງຕາມ ມາດຕາ 38, 39 ແລະ 40 ຂອງຂໍ້ຕົກລົງ ວ່າດ້ວຍ ການຄຸ້ມຄອງກອງທຶນປົກປັກຮັກສາສິ່ງແວດລ້ອມ ສະບັບເລກທີ 02/ກປສ.ຫກ, ລົງວັນທີ 09 ກຸມພາ 2021.

### 6.1. ການສະເໜີຂໍທຶນໂດຍພາກລັດ

1) ສຳລັບຂັ້ນສູນກາງ, ບັນດາກົມ ກອງ ຂອງ ກະຊວງ ຫຼື ອົງການທຽບເທົ່າ ຕ້ອງສະເໜີຂໍຄຳເຫັນຈາກ ກົມວິຊາການທີ່ມີພາລະບົດບາດກ່ຽວຂ້ອງກັບຂະແໜງການນັ້ນ (ຕົວຢ່າງ: ໂຄງການກ່ຽວກັບການຄຸ້ມຄອງປ່າໄມ້ ແລະ ຊີວະນາໆພັນ ຕ້ອງສະເໜີຂໍຄຳເຫັນຈາກ ກົມປ່າໄມ້, ກະຊວງກະສິກຳ ແລະ ປ່າໄມ້, ໂຄງການກ່ຽວກັບ ວຽກງານທີ່ດິນ ຕ້ອງສະເໜີຂໍຄຳເຫັນຈາກ ກົມທີ່ດິນ, ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ) ເພື່ອກວດກາຄວາມສອດຄ່ອງກັບແຜນບູລິມະສິດຂອງພາກສ່ວນດັ່ງກ່າວ ແລະ ບໍ່ເປັນໂຄງການຊໍ້າຊ້ອນ. ຖ້າໄດ້ຮັບການເຫັນດີ ຈາກກົມວິຊາການ ຈຶ່ງສະເໜີໂຄງການເປັນທາງການຜ່ານກົມແຜນການ ຫຼື ພາກສ່ວນຮັບຜິດຊອບວຽກງານແຜນການຂອງຂະແໜງການຕົນ ສົ່ງໃຫ້ ຫກປສ;
2) ສຳລັບທ້ອງຖິ່ນ ຕ້ອງສະເໜີຜ່ານພະແນກການທີ່ກ່ຽວຂ້ອງ ຂັ້ນແຂວງ ເຊັນຢັ້ງຢືນຮັບຮູ້ ພ້ອມທັງສະເໜີຂໍຄຳເຫັນນຳ ກົມວິຊາການຂັ້ນສູນກາງທີ່ມີພາລະບົດບາດທີ່ກ່ຽວຂ້ອງ ກັບວຽກງານທີ່ສະເໜີຂໍທຶນ ເພື່ອກວດກາຄວາມສອດຄ່ອງກັບແຜນບູລິມະສິດຂອງພາກສ່ວນດັ່ງກ່າວ ແລະ ບໍ່ເປັນໂຄງການຊໍ້າຊ້ອນ. ຖ້າໄດ້ຮັບການ

ເຫັນດີ ຈາກກົມວິຊາການ ຈຶ່ງສະເໜີໂຄງການເປັນທາງການຜ່ານ ກົມແຜນການ ຂອງຂະແໜງການຕົນ ສົ່ງໃຫ້ ກປສ (ຕົວຢ່າງ: ໂຄງການຂອງຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມເມືອງ ຕ້ອງສະເໜີຜ່ານ ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມແຂວງ ພ້ອມທັງສະເໜີຂໍຄຳເຫັນກົມວິຊາການທີ່ກ່ຽວຂ້ອງ ແລະ ກົມແຜນການ ແລະ ການເງິນ, ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ຫຼື ກົມແຜນການ ຂອງກະຊວງທີ່ກ່ຽວຂ້ອງ).

### 6.2. ການສະເໜີຂໍທຶນໂດຍ ອົງການຈັດຕັ້ງສັງຄົມ

ບົດສະເໜີໂຄງການຂອງ ອົງການຈັດຕັ້ງສັງຄົມ ທີ່ຕິດພັນກັບວຽກງານຂອງຂະແໜງການກ່ຽວຂ້ອງຂອງພາກລັດ ຕ້ອງໄດ້ສະເໜີຂໍຄຳເຫັນຈາກ ກົມວິຊາການ ຂອງກະຊວງທີ່ກ່ຽວຂ້ອງ ແລະ ອົງການປົກຄອງທ້ອງຖິ່ນທີ່ໂຄງການຕັ້ງຢູ່ ເພື່ອກວດກາຄວາມສອດຄ່ອງກັບແຜນບູລິມະສິດຂອງພາກສ່ວນດັ່ງກ່າວ ແລະ ບໍ່ເປັນໂຄງການຊໍ້າຊ້ອນ ແລ້ວສົ່ງໃຫ້ ກປສ (ຕົວຢ່າງ: ໂຄງການຂອງອົງການຈັດຕັ້ງສັງຄົມ ທີ່ກ່ຽວຂ້ອງກັບການອະນຸລັກປ່າໄມ້ບ້ານ ຕ້ອງສະເໜີຂໍຄຳເຫັນກັບກົມປ່າໄມ້, ກະຊວງກະສິກຳ ແລະ ປ່າໄມ້ ແລະ ໄດ້ຮັບການເຫັນດີຈາກ ອົງການປົກຄອງຂັ້ນເມືອງ/ຂັ້ນແຂວງ).

## VII. ການຈັດສັນທຶນ

ການຈັດສັນທຶນ ສຳລັບແຕ່ລະຮ່ອງທຶນ ແມ່ນອີງໃສ່ກອບການສະໜອງທຶນຂອງແຕ່ລະຮ່ອງທຶນ ທີ່ກຳນົດໄວ້ໃນຄຳແນະນຳສະບັບນີ້ ສອດຄ່ອງກັບ ກົດໝາຍ, ວິໄສທັດ, ຍຸດທະສາດ, ແຜນການ 5 ປີ ຂອງ ກປສ ແລະ ສອດຄ່ອງກັບສະພາບບັນຫາສິ່ງແວດລ້ອມຕົວຈິງທີ່ຕ້ອງການແກ້ໄຂ, ແນວທາງນະໂຍບາຍ ແລະ ມາດຕະການໃນການຈັດຕັ້ງປະຕິບັດວຽກງານການຄຸ້ມຄອງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມໃນຊຸມປີຕໍ່ໜ້າ.

**ຕາຕະລາງ 5: ຄາດຄະເນການສະໜອງທຶນ ພາຍໃນ 2022-2025 ຕາມແຜນງົບປະມານແຫ່ງລັດ**

| ລາຍການ | ເປີເຊັນ | ປີ 2022<br>ຈຳນວນເງິນ (ກີບ) | ປີ 2023<br>ຈຳນວນເງິນ (ກີບ) | ປີ 2024<br>ຈຳນວນເງິນ (ກີບ) | ປີ 2025<br>ຈຳນວນເງິນ (ກີບ) |
|---|---|---|---|---|---|
| ຮ່ວງທຶນ ດ້ານນະໂຍບາຍ | 30% | 3,361,200,000 | 3,361,200,000 | 3,361,200,000 | 3,361,200,000 |
| ຮ່ວງທຶນ ດ້ານຊີວະນາໆພັນ | 15% | 1,680,600,000 | 1,680,600,000 | 1,680,600,000 | 1,680,600,000 |
| ຮ່ວງທຶນ ດ້ານສິ່ງແວດລ້ອມ | 20% | 2,240,800,000 | 2,240,800,000 | 2,240,800,000 | 2,240,800,000 |
| ຮ່ວງທຶນ ດ້ານດິນ | 15% | 1,680,600,000 | 1,680,600,000 | 1,680,600,000 | 1,680,600,000 |
| ຮ່ວງທຶນ ດ້ານນໍ້າ | 10% | 1,120,400,000 | 1,120,400,000 | 1,120,400,000 | 1,120,400,000 |
| ຮ່ວງທຶນປ່ຽນແປງດິນຟ້າອາກາດ | 10% | 1,120,400,000 | 1,120,400,000 | 1,120,400,000 | 1,120,400,000 |
| **ລວມທັງໝົດ** | **100%** | 11,204,000,000 | 11,204,000,000 | 11,204,000,000 | 11,204,000,000 |

### 7.1. Annex 1 - ແບບຟອມມາດຕະຖານ ໂຄງການຂະໜາດນ້ອຍ ເພື່ອຂໍທຶນຊ່ວຍເຫຼືອ ທີ່ມີມູນຄ່າ **100.000.000 ຫາ 300.000.000 ກີບ**

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ**

ກອງທຶນປົກປັກຮັກສາສິ່ງແວດລ້ອມ
ຫ້ອງການ

**ຊື່ໂຄງການ:** ..............................................................................

**ຮ່ວງທຶນ:**
□ ນະໂຍບາຍ
□ ຊີວະນາໆພັນ
□ ຄວບຄຸມມົນລະພິດ
□ ຄຸ້ມຄອງຊັບພະຍາກອນນໍ້າ,
□ ຄຸ້ມຄອງທີ່ດິນ
□ ປ່ຽນແປງດິນຟ້າອາກາດ

ສະຖານທີ່: ..........................................................................................
ປະກອບຄໍາຮ້ອງໂດຍ: ..........................................................................................
ວັນ, ເດືອນ, ປີ: ..........................................................................................
ມູນຄ່າໂຄງການ: ..........................................................................................
ໄລຍະເວລາໂຄງການ: ..........................................................................................
ເອກະສານຄັດຕິດ: ..........................................................................................
..........................................................................................
..........................................................................................

***ບົດສັງລວມ ເນື້ອໃນຂອງບົດໂດຍຫຍໍ້***

| | |
|---|---|
| ຊື່ໂຄງການ: | |
| ຈໍານວນທຶນທັງໝົດ: | |

| | |
|---|---|
| ຈຸດປະສົງຕົ້ນຕໍ: | |
| ກິດຈະກໍາທີ່ສໍາຄັນ: | |
| ຜົນທີ່ຈະໄດ້ຮັບຈາກ<br>ໂຄງການ: | |
| ອົງການຈັດຕັ້ງປະຕິບັດ<br>ໂຄງການ: | |
| ພາກສ່ວນທີ່ຈະໄດ້ຮັບຜົນ<br>ປະໂຫຍດຈາກໂຄງການ: | |
| ໄລຍະດໍາເນີນໂຄງການ: | |
| ອື່ນໆ: | |

ຜູ້ປະກອບຄໍາຮ້ອງຄວນພະຍາຍາມຂຽນຄໍາຮ້ອງຕາມເນື້ອໃນດັ່ງຕໍ່ໄປນີ້:

1. ລາຍລະອຽດຂອງຊຸມຊົນ ແລະ ຜູ້ຕິດຕໍ່ພົວພັນ:
   ຊື່ກຸ່ມ: ........................................ ບ້ານ: ................................................
   
   ເມືອງ: ........................................ ແຂວງ: ...............................................
   
   ຊື່ຜູ້ຕິດຕໍ່ພົວພັນ: .........................................................................................
   
   ບ້ານ: ........................................ ເມືອງ: ................................................
   
   ແຂວງ: ..........................................................................................................
   
   ເລກໂທລະສັບຕິດຕໍ່ (ຖ້າມີ):......................................................................

2. ຈຸດປະສົງ ແລະ ລະດັບຄາດຫມາຍຂອງໂຄງການມີຫຍັງແນ່:
   ໝາຍເຫດ: **ສູງສຸດແມ່ນບໍ່ເກີນ 5 ຈຸດປະສົງ.**

- ..............................................................................................................
- ..............................................................................................................
- ..............................................................................................................

- ..........................................................................................................
- ..........................................................................................................

ຄວນຂຽນແຕ່ລະຈຸດປະສົງໃຫ້ແຈ້ງ.

3. **ລາຍລະອຽດຂອງກິດຈະກຳ ຫຼື ໜ້າວຽກທີ່ຈະເຮັດມີຫຍັງແດ່?**

(ຫມາຍເຫດ: ກິດຈະກຳ ແລະ ຫນ້າວຽກຕ້ອງສະແດງວ່າແກ້ໄຂຈຸດປະສົງເທິງນັ້ນ)

- ..................................................................................................
- ..................................................................................................
- ..................................................................................................
- ..................................................................................................

4. ຜົນໄດ້ຮັບຂອງແຕ່ລະກິດຈະກຳ ຫຼື ໜ້າວຽກທີ່ຈະເຮັດມີຫຍັງແນ່?

**(ຫມາຍເຫດ: ຜົນໄດ້ຮັບຕ້ອງສອດຄອງກັບຈຸດປະສົງ ແລະ ກິດຈະກຳເທິງນັ້ນ)**

- ..................................................................................................
- ..................................................................................................
- ..................................................................................................

5. ກຸ່ມທີ່ຈະໄດ້ຮັບຜົນປະໂຫຍດຈາກໂຄງການ:

- ຜູ້ທີ່ເຂົ້າຮ່ວມໂຄງການເທົ່ານັ້ນ ☐
- ໝົດທຸກຄົນຢູ່ໃນບ້ານ ☐
- ຜູ້ທີ່ຢູ່ບ້ານໃກ້ຄຽງ ☐

6. ການສືບຕໍ່ເຮັດວຽກຫຼັງຈາກຈົບໂຄງການ:

- ຫຼັງຈາກຈົບໂຄງການແລ້ວ, ກຸ່ມຂອງທ່ານຈະເຮັດວຽກນີ້ຕໍ່ໄປໄດ້ບໍ?

ໄດ້ ☐ ບໍ່ໄດ້ ☐

- ຖ້າໄດ້, ກຸ່ມຂອງທ່ານຈະເຮັດແນວໃດ? (ໃຫ້ອະທິບາຍ)

..................................................................................................................

..................................................................................................................

**7.** ລາຍລະອຽດກ່ຽວກັບການຈັດຕັ້ງ

- ຊື່ຫົວໜ້າໂຄງການ: ..........................................................................

  ອາຊີບ/ຕຳແໜ່ງ..................................... ບ້ານຢູ່......................................

- ຊື່ຂອງຮອງຫົວໜ້າໂຄງການ: ...............................................................

  ອາຊີບ/ຕຳແໜ່ງ: ..................................... ບ້ານຢູ່......................................

- ຊື່ຂອງວິຊາການໂຄງການ: ...............................................................

  ອາຊີບ/ຕຳແໜ່ງ: ..................................... ບ້ານຢູ່......................................

-ຊື່ຂອງພະນັກງານການເງິນໂຄງການ:.....................................................................

  ອາຊີບ/ຕຳແໜ່ງ..................................... ບ້ານຢູ່......................................

- ຊື່ຂອງພະນັກງານບັນຊີໂຄງການ: ...............................................................

  ອາຊີບ/ຕຳແໜ່ງ: ..................................... ບ້ານຢູ່.....................................

10. ແຜນການເຄື່ອນໄຫວມີຄືແນວໃດ?

| ລາຍການກິດຈະກຳ | | ເດືອນ | | | | | | | | | | | |
|---|---|---|---|---|---|---|---|---|---|---|---|---|---|
| | 1 | 2 | 3 | 4 | 5 | 6 | 7 | 8 | 9 | 10 | 11 | 12 | |
| 1. | | | | | | | | | | | | | |
| 2. | | | | | | | | | | | | | |
| 3. | | | | | | | | | | | | | |
| 4. | | | | | | | | | | | | | |

11. ງົບປະມານທີ່ຕ້ອງການໃຊ້ໃນວຽກໂຄງການມີຫຍັງແດ່**?** (ໃຫ້ຕື່ມໃສ່ຕາຕະລາງ)

| ລ/ດ | ລາຍການ | ຈຳນວນ | ເປັນເງິນ |
|---|---|---|---|
| 1 | | | |

| | | | |
|---|---|---|---|
| 2 | | | |
| 3 | | | |
| 4 | | | |
| 5 | | | |
| ລວມເປັນເງິນ | | | |

ເງື່ອນໄຂ ການປະຕິບັດແຜນງານປະຈໍາປີທີ່ໄດ້ຕົກລົງກັນ ລາຍການເປົ້າໝາຍທີ່ໄດ້ຕົກລົງວ່າຈະໄດ້ສໍາເລັດ ເພື່ອເປັນເງື່ອນໄຂການອະນຸມັດງົບປະມານໃນປີຕໍ່ໄປ. ໄດ້ຕົກລົງໃນເງື່ອນໄຂທີ່ວ່າ:

- ປະຕິບັດຖືກຕ້ອງດ້ານຄວາມໂປ່ງໃສ ແລະ ຄວາມຕ້ອງການໃນການປ້ອງກັນຜົນກະທົບ (ຢ່າງໜ້ອຍໄດ້ໃນລະດັບປານກາງ ໃນປີທີ 1 ແລະ ພໍໃຊ້ໃນປີຕໍ່ໄປ).
- ປະຕິບັດຖືກຕ້ອງຕາມມາດຖານການລາຍງານ (ດ້ານຈໍານວນ, ຄຸນນະພາບແລະເວລາຢ່າງ ໜ້ອຍໄດ້ໃນລະດັບປານກາງ ໃນປີທີ 1 ແລະ ພໍໃຊ້ໃນປີຕໍ່ໄປ).
- ໃນປີທີ 1 ຢ່າງໜ້ອຍ 50% ຂອງກິດຈະກໍາແຜນປີໄດ້ສໍາເລັດ. ໃນປີທີ 2 ແລະຕໍ່ໄປຢ່າງໜ້ອຍ 70% ຂອງແຕ່ລະກິດຈະກໍາແຜນປີໄດ້ສໍາເລັດ.
- ເປົ້າໝາຍຂອງຜົນຮັບໃນປີທີ່ພວມປະຕິບັດນັ້ນ ໄດ້ມີການວັດແທກ, ປະເມີນຜົນ ແລະ ສະແດງໃຫ້ເຫັນຄວາມຄືບໜ້າ ທີ່ຈະສໍາເລັດຕາມເປົ້າໝາຍ.
- ແຜນວຽກແລະງົບປະມານປີໃໝ່ ຈະໄດ້ສ້າງຂຶ້ນແລະຮັບຮອງໂດຍ ກປສ ເປັນແຕ່ລະປີ.

ຈົ່ງຂັດຕິດເອກະສານດັ່ງຕໍ່ໄປນີ້ໂດຍອີງໃສ່ຮ່າງທີ່ສະໜອງໃຫ້ໃນ EXCEL:

- ☐ ແຜນງົບປະມານລວມຂອງໂຄງການ ແຍກຕາມປະເພດລາຍຈ່າຍ ແລະ ອົງປະກອບ (ເອກະສານຂັດຕິດ 1)
- ☐ ກອບຜົນໄດ້ຮັບໂຄງການ (ເອກະສານຂັດຕິດ 2)
- ☐ ແຜນງົບປະມານຂອງໂຄງການ ປີທໍາອິດ ແຍກຕາມປະເພດລາຍຈ່າຍ ແລະອົງປະກອບ (ເອກະສານຂັດຕິດ 3)
- ☐ ແຜນລະອຽດແຍກເປັນປີ (ເອກະສານຂັດຕິດ 4)

ວັນທີ .............................

**ຮັບຮູ້ ແລະ ເຫັນດີ ໂດຍ** | **ສະເໜີໂດຍ**

## 7.2. Annex 2 ແບບຟອມມາດຕະຖານ ເພື່ອຂໍທຶນຊ່ວຍເຫຼືອ ໂຄງການຂະໜາດກາງ ທີ່ມີມູນຄ່າບໍ່ເກີນ 800.000.000 ກີບ

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ**

-----===000===-----

**ກອງທຶນປົກປັກຮັກສາສິ່ງແວດລ້ອມ**

**ຫ້ອງການ**

**ແບບຟອມບົດສະເໜີໂຄງການ**

ຂໍ້ແນະນຳ:

ຄຳຮ້ອງສາມາດຍື່ນເປັນພາສາລາວ.

ບັນທັດຖານທີ່ຈະໄດ້ທຶນມີດັ່ງຕໍ່ໄປນີ້: (a) ສະໜັບສະໜູນນະໂຍບາຍ, ຍຸດທະສາດແລະແຜນການຂອງ ລັດຖະບານ /ແຂວງ; (b) ຖືກກັບໜຶ່ງຂອງເຂດຂອງກອງທຶນຍ່ອຍຂອງ ກປສ (ໜ້າວຽກນະໂຍບາຍແລະ ສ້າງຄວາມ ສາມາດ, ຊີວະນາໆພັນ, ຄວບຄຸມມົນລະພິດ, ຄຸ້ມຄອງຊັບພະຍາກອນນໍ້າ, ຄຸ້ມຄອງທີ່ດິນ); (c) ບໍ່ມີກິດຈະກຳທີ່ເກືອດຫ້າມ.

ໂຄງການຍ່ອຍ, ຖ້າແມ່ນຫຼາຍປີ, ຈະໄດ້ຕ້ອງມີຜົນງານທີ່ດີເພື່ອຈະຕໍ່ໃນປີຕໍ່ໄປ. ການປະເມີນຜົນງານປະຈຳປີ ພົວພັນ ກັບທຶນ, ການຄຸ້ມຄອງ ແລະ ຜົນໄດ້ຮັບໃນປີນັ້ນ ຊຶ່ງໄດ້ກຳນົດໄວ້.

| ເລກລະຫັດບົດສະເໜີໂຄງການຍ່ອຍຂອງກປສ: | |
|---|---|
| **1.** ຊື່ ແລະ ທີ່ຢູ່ຂອງອົງການຈັດຕັ້ງປະຕິບັດໂຄງການຍ່ອຍ: | |
| **2.** ຊື່, ໜ້າທີ່, ບ່ອນພົວພັນລະອຽດ ຈຸດປະສານງານຜູ້ສະເໜີຈັດຕັ້ງປະຕິບັດໂຄງການຍ່ອຍ: | 1) ທ່ານ<br>ອີເມວ:<br>ໂທລະສັບ:<br>ມືຖື:<br>2) ທ່ານ<br>ອີເມວ: |

| | |
|---|---|
| | ໂທລະສັບ:<br>ມືຖື:<br>3) ທ່ານ<br>ອີເມວ:<br>ໂທລະສັບ:<br>ມືຖື: |
| **3.** ລະດັບພື້ນທີ່ຂອງໂຄງການຍ່ອຍ<br><br>(ອາດຫຼາຍກວ່າ 1 ທາງເລືອກ) | □ ລະດັບສາກົນ<br>□ ສູນກາງ/ລະດັບຊາດໃຫ້ບອກເຂດເປົ້າໝາຍ<br>☑ ລະດັບແຂວງ,<br>☑ ລະດັບເມືອງ, |
| **4.** ຊື່ໂຄງການ<br><br>ຂຽນເປັນພາສາລາວ ແລະ ພາສາອັງກິດ | |
| **5.** ຈຳນວນທຶນທີ່ຂໍ :(ງົບໂດຍປະມານ ເປັນເງິນກີບ) | |
| **6.** ກອງທຶນຍ່ອຍຂອງກປສທີ່ໃຫ້ທຶນ *(ໃຫ້ໝາຍເອົາ 1 ທາງເລືອກ)* | □ ນະໂຍບາຍ<br>□ ຊີວະນາໆພັນ<br>□ ຄວບຄຸມມົນລະພິດ<br>□ ຄຸ້ມຄອງຊັບພະຍາກອນນ້ຳ,<br>□ ຄຸ້ມຄອງທີ່ດິນ<br>□ ປ່ຽນແປງດິນຟ້າອາກາດ |
| **7.** ໜ້າວຽກສະຖາບັນ ຫຼືຂະແໜງການທີ່ພົວພັນກັບໂຄງການຍ່ອຍ, ສິ່ງທ້າທາຍ ແລະບູລິມະສິດ (ອະທິບາຍກ່ຽວກັບໜ້າທີ່ຂອງຜູ້ສະເໜີ, ຄວາມອາດສາມາດ ແລະ ໜ້າວຽກທີ່ເຮັດໃນປະຈຸບັນ, ບູລິມະສິດທີ່ຕ້ອງການ ແລະ ສະເໜີແນວທາງໃນການແກ້ໄຂ ບູລິມະສິດ ແລະ ຂໍ້ຄົງຄ້າງດັ່ງກ່າວ). | ສະພາບລວມ:<br><br>ໜ້າທີ່ຂອງຂະແໜງສິ່ງແວດລ້ອມ<br><br>ສິ່ງທ້າທາຍ ແລະ ຄວາມຕ້ອງການຂອງຂະແໜງ<br><br>ຮູບແບບການຈັດຕັ້ງປະຕິບັດ: |
| **8.** ບັນຫາ ແລະ ສາຍເຫດ ແລະຈະແກ້ໄຂບັນຫາໃດ ສະເໜີຂຽນທຶນ ແລະ ຂຽນ | |

| | |
|---|---|
| ບົດສະເໜີໂຄງການນຳກອງທຶນປົກປັກຮັກສາສິ່ງແວດລ້ອມ | |
| **9.** ຄວາມສ່ຽງ ອາດຈະເກີດຂຶ້ນໃນໄລຍະກ່ອນ ແລະ ການຈັດຕັ້ງປະຕິບັດໂຄງການ<br>ໃຫ້ລະບຸມາ 3-5 ຂໍ້ | |
| **10.** ຈຸດປະສົງຂອງໂຄງານຍ່ອຍ<br>(ໃຫ້ຂຽນພຽງປະໂຫຍກດຽວ) | |
| **11.** ນະໂຍບາຍ/ແຜນການ ແລະ ຍຸດທະສາດຂອງລັດຖະບານ ທີ່ສະໜັບສະໜູນໂດຍໂຄງການ ຍ່ອຍ (ລວມທັງແຜນຍຸດທະສາດຂອງແຂວງຖ້າເປັນໄປໄດ້). | |
| **12.** ຜົນຮັບລະດັບພາກພື້ນ ແລະ ລະດັບໂລກທີ່ໂຄງການຍ່ອຍສະໜັບສະໜູນ ຫຼືປະກອບສ່ວນ ***(ເຊັ່ນ: ການຮ່ວມມືລະຫວ່າງຊາດ, ການແລກປ່ຽນຄວາມຮູ້, ປ້ອງກັນ ການຄ້າ-ຂາຍສັດປ່າທີ່ຜິດກົດໝາຍ ໃນເຂດພາກພື້ນ).*** | |
| **13. ຕົວຊີ້ວັດຜົນຮັບຂອງໂຄງການ ຍ່ອຍ** (ຂຽນລາຍການຕົວຊີ້ວັດຜົນຮັບຂອງໂຄງການຍ່ອຍພ້ອມທັງອະທິບາຍຕົວຊີ້ວັດຜົນໄດ້ຮັບ ແລະຜົນກະທົບຂອງໂຄງການຍ່ອຍເປັນຜົນປະໂຫຍດໄລຍະຍາວ ໃດໜຶ່ງສະເພາະກ່ຽວກັບສິ່ງຂອງ ຫຼືການບໍລິການຕໍ່ກຸ່ມຜູ້ໄດ້ຮັບຜົນປະໂຫຍດເປົ້າໝາຍ). | ຕົວຊີ້ວັດຜົນຮັບຂອງໂຄງການຍ່ອຍມີດັ່ງນີ້:<br>1.1: ຜູ້ໄດ້ຮັບຜົນປະໂຫຍດໂດຍກົງ (ໃນນີ້ມີຍິງເທົ່າໃດ) ໂດຍວັດແທກຕາມຈຳນວນພະນັກງານທີ່ໄດ້ເຂົ້າໃນຊຸດຮຽນສຳເລັດ ກ່ຽວກັບການປະເມີນຜົນສິ່ງແວດລ້ອມແລະສັງຄົມ ແລະ ລະບຽບກົດໝາຍກ່ຽວຂ້ອງ<br>ຖານຂໍ້ມູນໄດ້ຮັບການສ້າງຂຶ້ນແລະເຄື່ອນໄຫວໄດ້ |
| ***14.*** ຜົນໄດ້ຮັບຕົ້ນຕໍຂອງໂຄງການ ຍ່ອຍ (ສິ່ງຂອງຫຼືການບໍລິການທີ່ໄດ້ຮັບຈາກການກະທົບໃສ່ຂອງໂຄງການ (ໂຕຂັບເຄື່ອນການ | - |

| | |
|---|---|
| ສະໜອງ) ເຊັ່ນ: ຈຳນວນພະນັກງານທີ່ໄດ້ຝຶກ, ເອກະສານຄູ່ມືເປັນຈຳນວນໃດໜຶ່ງທີ່ໄດ້ສ້າງຂຶ້ນ) | - |

**15.** ອົງປະກອບ ແລະ ກິດຈະກຳ (ຂຽນລາຍການອົງປະກອບ ແລະ ກິດຈະກຳທີ່ຈະຮັດໃຫ້ເກີດຜົນໄດ້ຮັບຂ້າງເທິງ. ບໍ່ຄວນໃຫ້ຫຼາຍກ່ວາ 5 ອົງປະກອບ (ເບິ່ງລາຍລະອຽດຢູ່ໃນແຜນວຽກ ແລະ ງົບປະມານປະຈຳປີຂັດຕິດ).

| ອົງປະກອບ | ກິດຈະກຳຕົ້ນຕໍ |
|---|---|
| ອົງປະກອບ 1<br>ລະບຸຊື່ໃສ່ອົງປະກອບພ້ອມ | ກິດຈະກຳ 1.1<br>ກິດຈະກຳ 1.2<br>ກິດຈະກຳ 1.3 |
| ອົງປະກອບທີ **2.**<br>ລະບຸຊື່ໃສ່ອົງປະກອບພ້ອມ | ກິດຈະກຳ 2.1<br>ກິດຈະກຳ 2.2<br>ກິດຈະກຳ 2.3 |
| ອົງປະກອບທີ 3.<br>ລະບຸຊື່ໃສ່ອົງປະກອບພ້ອມ | ກິດຈະກຳ 3.1<br>ກິດຈະກຳ 3.2<br>ກິດຈະກຳ 3.3 |

| | |
|---|---|
| **16.** ຜູ້ເປົ້າໝາຍທີ່ໄດ້ຮັບຜົນປະໂຫຍດ | ☒ ພະນັກງານລັດ<br>ຈຳນວນທັງໝົດ () ແມ່ຍິງ ()<br>*ລະດັບສູນກາງ* ( ) ແມ່ຍິງ ( )<br>*ລະດັບແຂວງ* () ແມ່ຍິງ ()<br>*ລະດັບເມືອງ* () ແມ່ຍິງ ()<br>□ຊຸມຊົນທ້ອງຖິ່ນ (_ບ້ານ_____), ຈຳນວນຄົນ ( ____ ) ແມ່ຍິງ ( ____ ) ຊົນເຜົ່າ<br>□ນັກສຶກສາ(_____) ແມ່ຍິງ (_____)<br>□ມວນຊົນທົ່ວໄປ |

| | |
|---|---|
| | □ພາກສ່ວນເອກະຊົນ |
| **17.** ມື້ເລີ່ມໂຄງການ<br><br>ວັນທີ ເດືອນ ປີ | |
| **18.** ມື້ປິດໂຄງການ (ໄລຍະໂຄງການເປັນປີ)ໃຫ້ລະບຸວ່າຈັກປີພ້ອມລະອຽດ | |
| **19.** **ຜູ້ຮ່ວມທຶນ** (ແຫຼ່ງແລະຈຳນວນເປັນ ກີບ ລວມທັງທຶນປະກອບ ສ່ວນເປັນວັດຖຸ ແລະ ແຮງງານ) ຫລື ທຶນປະກອບສ່ວນ ຈາກໂຄງການທີ່ສະເໜີເອງໃຫ້ລະບຸລະອຽດ | ທຶນປະກອບສ່ວນຂອງລັດຖະບານໄລ່ຈາກຄ່າປະກອບສ່ວນຂອງພະນັກງານ ແລະ ສະຖານທີ່ເຮັດວຽກ ໂດຍທີ່ບໍ່ເປັນເງິນສົດ ປະມານ 95 ລ້ານກີບ |
| **20.** ໂຄງການ/ ແຜນງານ ເສີມໃສ່ ສິ່ງໄດ້ລິເລີ່ມ ຫຼື ກຳລັງດຳເນີນ (ຊື່, ແຫຼ່ງທຶນສາຍພົວພັນກັບໂຄງການ, ຫລື ສະເໜີທຶນນຳອົງການໃດອີກແດ່) | |

**21. ກົນໄກການຈັດຕັ້ງໂຄງການຍ່ອຍ**

a) ອະທິບາຍໂຄງຮ່າງການຄຸ້ມຄອງໂຄງການຍ່ອຍ.

*b)* ພະນັກງານແລະການຊ່ວຍເຫຼືອທາງວິຊາການທີ່ຕ້ອງການເພີ່ມເຕີມ ໃນດ້ານໃດ ເພື່ອເຮັດໃຫ້ ໂຄງການຍ່ອຍທີ່ສະເໜີມາ ໄດ້ຮັບຜົນສຳເລັດ (ເປັນຕົ້ນພະນັກງານກວດກາຕິດຕາມ, ບັນຊີການເງິນ….).

a) ອະທິບາຍໂຄງຮ່າງການຄຸ້ມຄອງໂຄງການຍ່ອຍ

ໂຄງຮ່າງການຈັດຕັ້ງຂອງໂຄງການຍ່ອຍປະກອບມີ ຜູ້ຊີ້ນຳໂຄງການ, ຫົວໜ້າໂຄງການ ແລະ ທີມງານວິຊາການ ຜູ້ຊີ້ນຳໂຄງການຈະແມ່ນຄະນະພະແນກ ແຕ່ບໍ່ໄດ້ປະຕິບັດໂຄງການຕົວຈິງ .ສ່ວນຫົວໜ້າໂຄງການຍ່ອຍຈະໄດ້ມີການແຕ່ງຕັ້ງມາຮັບຜິດຊອບວຽກງານນີ້ເປັນສ່ວນໃຫ່ຍ ແລະ ຈະເຮັດວຽກກັບວິຊາການ .ວິຊາການຈະເປັນພະນັກງານພະແນກ ເຊິ່ງມີຜູ້ຮັບຜິດຊອບວິຊາການ ແລະ ບັນຊີການເງິນ .ນອກນີ້ພະນັກງານຈັດຈ້າງ-ຈັດຊື້ ຂອງ ກປສ ຈະໄດ້ໃຫ້ການສະໜັບສະໜູນ ແລະ ພະນັກງານຫ້ອງການເມືອງຍັງຈະໄດ້ເຂົ້າຮ່ວມໃນການຈັດຕັ້ງປະຕິບັດກິດຈະກຳດັ່ງກ່າວ.

ບັນດາພະນັກງານທີ່ຖືກມອບໝາຍໃຫ້ເຮັດວຽກໂຄງການຍ່ອຍນີ້ຈະໄດ້ກຳນົດເງື່ອນໄຂການເຮັດວຽກຢ່າງຄັກແນ່ໂດຍສະເພາະຫົວໜ້າໂຄງການ, ຮອງຫົວໜ້າໂຄງການ, ວິຊາການ ແລະ ບັນຊີ-ການເງິນ, ການປະ

ເມີນຜົນງານຂອງພະນັກງານຂອງພະນັກງານທີມງານໂຄງການຕ້ອງໄດ້ເຮັດເພື່ອເບິ່ງວ່າພະນັກງານມີຄວາມຈຳເປັນໃນການຝຶກວຽກງານໃດໜຶ່ງສະເພາະ ຫຼື ໜ້າວຽກເພີ່ມເຕີມ ເພື່ອໃຫ້ເຮັດວຽກໄປຕາມໜ້າທີ່ .

ໂຄ່ງຮ່າງການຈັດຕັ້ງ

- ຜູ້ຊີ້ນຳໂຄງການ :

- ທີມງານວິຊາການ :

- ທີມງານການເງິນ :

**22.** ງົບປະມານລວມ

ສະໜີງົບປະມານ ແລະ ຂັດຕິດກັບບົດສະເໜີໂຄງການຍ່ອຍ (ເບິ່ງຮ່າງທີ່ໄດ້ຂັດຕິດມາພ້ອມນີ້). ໃນບົດສະເໜີນີ້ ຈະສະເດງໃຫ້ເຫັນພຽງແຕ່ງົບປະມານສັງລວມຂອງໂຄງການຍ່ອຍ. ສັງເກດວ່າເມື່ອໂຄງການຍ່ອຍຈະໄດ້ຖືກຮັບຮອງໝົດໄລຍະໂຄງການຍ່ອຍທັງໝົດ ແຕ່ຫຼັງຈາກປີທີ 1, ທຶນຮອບຈະປ່ອຍໃຫ້ນັ້ນ ແມ່ນອີງໃສ່ຜົນງານໃນປີຜ່ານມາ, ອີງໃສ່ຄາດໝາຍ ທີ່ກຳນົດໃນແຜນປີທີ່ໄດ້ຖືກຮັບຮອງເອົາ (ເບິ່ງຂໍ້ 24).ສຳລັບໂຄງການຍ່ອຍທີ່ໄດ້ຮັບຮອງແລ້ວຫ້ອງການກປສຈະເປັນຜູ້ເຮັດແຜນຈັດຊື້-ຈັດຈ້າງຕ່າງໆ.

| ອົງປະກອບ (ບໍ່ເກີນ 5 ອົງປະກອບລວມທັງການຄຸ້ມຄອງໂຄງການ) | 2020 | 2021 | 2022 | 2023 | 2024 | ທຶນຈາກ ກປສ | ທຶນສົມທົບ |
|---|---|---|---|---|---|---|---|
| **ອົງປະກອບ** 1 | | | | | | | |
| **ອົງປະກອບທີ** 2 | | | | | | | |
| **ອົງປະກອບ** 3. | | | | | | | |
| **ລວມມູນຄ່າພື້ນຖານ** | | | | | | | |
| | | | | | | | |
| ລວມຍອດ | | | | | | | |

**23. ຄວາມຍືນຍົງ**

ອະທິບາຍຜົນໄດ້ຂອງໂຄງການຍ່ອຍຈະມີສືບຕໍ່ ຫຼື ຮັກສາໄວ້ ຫຼັງໂຄງການສິ້ນສຸດ.

| |
|---|
| |

**24. ການປະຕິບັດຕາມນະໂຍບາຍປ້ອງກັນສິ່ງແວດລ້ອມແລະສັງຄົມ.**

ກວດກາເບິ່ງວ່າມີຄວາມຕ້ອງການກະກຽມ ແຜນຄຸ້ມຄອງສິ່ງແວດລ້ອມ ແລະ ສັງຄົມ ຫຼື ບໍ່ (ກອບແຜນຄຸ້ມຄອງສິ່ງແວດລ້ອມ ແລະ ສັງຄົມ ສາມາດຄົ້ນຫາໄດ້ ທີ່ເວັບໄຊ ກປສ.

**25. ການມີສ່ວນຮ່ວມຂອງຊຸມຊົນ ລວມທັງບັນຫາບົດບາດຍິງ-ຊາຍ, ຊົນເຜົ່າ ໃນລະດັບບ້ານ**

ເບິ່ງຕາມເອກະສານແນະນຳ ກ່ຽວກັບຂັ້ນຕອນປະຕິບັດ ໃນແຜນການມີສ່ວນຮ່ວມຂອງຊຸມຊົນ, ຊຶ່ງສາມາດຄົ້ນຫາ ໄດ້ທີ່ເວັບໄຊ ກປສ.

| |
|---|
| ຊຸມຊົນມີບົດບາດໃນການກຳນົດປະເດັນ ແລະ ສະເໜີມາດຕະການໃນການຄຸ້ມຄອງ, ການຖອດຖອນບົດຮຽນ ທຸກຊຸມຊົນຈະຕ້ອງໄດ້ມີສ່ວນຮ່ວມຢ່າງຈິງໃຈ ແລະ ສ້າງສັນ ຮັບຮູ້ຜົນດີ ແລະ ຜົນຮ້າຍຈາກການນຳໃຊ້ສານເຄມີ ແລະ ຈະໄດ້ຮັບຜົນປະໂຫຍດຈາກໂຄງການ ແລະ ຮັບຜິດຊອບຈາກການຄຸ້ມຄອງໃນການຊົມໃຊ້ຢາປາບວັດສະພືດ. |

**26. ບັນຫາບົດບາດຍິງ-ຊາຍ**

ອະທິບາຍກ່ຽວກັບໂຄງການຍ່ອຍໄດ້ຍິນຍອມກັບນະໂຍບາຍຂອງລັດໃນການເອົາໃຈໃສ່ ຕໍ່ບັນຫາບົດບາດຍິງ-ຊາຍ ພາຍໃຕ້ ໂຄງການ.

| |
|---|
| ຢ່າງນ້ອຍ 20% ຂອງຜູ້ເຂົ້າຮ່ວມຕ້ອງເປັນເພດຍິງ. ໜ້າວຽກກ່ຽວກັບໂຄງການຍ່ອຍນີ້ຈະແມ່ນການກຳນົດຜູ້ເຂົ້າຮ່ວມຮັບຟັງການລົງໂຄສະນາເຜີຍແຜ່, ການລົງເກັບກຳຂໍ້ມູນ, ໂດຍກວດເບິ່ງອັດຕາສ່ວນການເຂົ້າຮ່ວມຂອງເພດຍິງຕື່ມ. ໂດຍອີງໃສ່ສະພາບຂອງຂະແໜງ. |

**27. ເງື່ອນໄຂ ການປະຕິບັດແຜນງານປະຈຳປີທີ່ໄດ້ຕົກລົງກັນ**

ລາຍການເປົ້າໝາຍທີ່ໄດ້ຕົກລົງວ່າຈະໄດ້ສຳເລັດ ເພື່ອເປັນເງື່ອນໄຂການອະນຸມັດງົບປະມານໃນປີຕໍ່ໄປ. ໄດ້ຕົກລົງໃນເງື່ອນໄຂທີ່ວ່າ:

- ປະຕິບັດຖືກຕ້ອງດ້ານຄວາມໂປ່ງໃສ ແລະ ຄວາມຕ້ອງການໃນການປ້ອງກັນຜົນກະທົບ ຢ່າງໜ້ອຍໄດ້ ໃນລະດັບປານກາງ ໃນປີທີ 1 ແລະ ພໍໃຊ້ໃນປີຕໍ່ໄປ
- ປະຕິບັດຖືກຕ້ອງຕາມມາດຖານການລາຍງານ ດ້ານຈຳນວນ, ຄຸນນະພາບແລະເວລາ ຢ່າງໜ້ອຍໄດ້ໃນລະດັບປານກາງ ໃນປີທີ 1 ແລະ ພໍໃຊ້ໃນປີຕໍ່ໄປ.
- ໃນປີທີ 1 ຢ່າງໜ້ອຍ 50% ຂອງກິດຈະກຳແຜນປີໄດ້ສຳເລັດ. ໃນປີທີ 2 ແລະຕໍ່ໄປຢ່າງໜ້ອຍ 70% ຂອງແຕ່ ລະກິດຈະກຳແຜນປີໄດ້ສຳເລັດ.

- ເປົ້າໝາຍຂອງຜົນຮັບໃນປີທີ່ພວມປະຕິບັດນັ້ນ ໄດ້ມີການວັດແທກ, ປະເມີນຜົນ ແລະ ສະແດງໃຫ້ ເຫັນຄວາມຄືບໜ້າ ທີ່ຈະສຳເລັດຕາມເປົ້າໝາຍ.
- ແຜນວຽກແລະງົບປະມານປີໃໝ່ ຈະໄດ້ສ້າງຂຶ້ນແລະຮັບຮອງໂດຍ ກປສ ເປັນແຕ່ລະປີ.

**28.** ບັນຊີເອກະສານຂັດຕິດ

ຈົ່ງຂັດຕິດເອກະສານດັ່ງຕໍ່ໄປນີ້ໂດຍອີງໃສ່ຮ່າງທີ່ສະໜອງໃຫ້ໃນ EXCEL:

☒ ແຜນງົບປະມານລວມຂອງໂຄງການ ແຍກຕາມປະເພດລາຍຈ່າຍ ແລະ ແຍກຕາມອົງປະກອບ (ເອກະສານຂັດຕິດ 1)

☒ ກອບຜົນຮັບ ຕົວຊີ້ວັດ ໂຄງການຍ່ອຍ (ເອກະສານຂັດຕິດ 2)

☒ ແຜນວຽກລະອຽດຂອງປີທີ 1 ຕາມອົງປະກອບ(ເອກະສານຂັດຕິດ 3)

☒ ແຜນລະອຽດແຍກເປັນປີ (ເອກະສານຂັດຕິດ 4)

☒ ແຜນຈັດຊື້ແລະຈັດຈ້າງ (ເອກະສານຂັດຕິດ 5)

ວັນທີ .............................

**ຮັບຮູ້ ແລະ ເຫັນດີ ໂດຍ** **ສະເໜີໂດຍ**